ອາຈານ ໂຣລາ

ພຣະຣາຊອານາຈັກລາວ

ຂ່າວກະຊວງທັມມະການ ສບັບພິເສດ

ປະຈຳເດືອນ ທັນວາ ໑໙໗໓

ບັນທຶກ

# ສຣຸບຜົນ ແລະ ຂໍ້ມະຕິ

## ກອງປະຊຸມຫລວງ ພຣະອາຄຍາສົດສົງ

ແລະ ທັມມະການແຂວງ

# ທົ່ວພຣະຣາຊອານາຈັກ

ທີ່

ນະຄອນວຽງຈັນ

## ວັນທີ່ ໑.໒ ແລະ ໓ ພຶສຈິກາ ໑໙໗໓

## ຄຳນຳ

ການປະຊຸມຫລວງ ພຣະອາຍາດສິດສົງ, ຄນະທີ່ປຶກສາສົງ, ຄນະກັມມາທິການບໍຣິຫານສົງ, ເຈົ້າຄນະແຂວງ, ພຣະອາຈານຫົວຫນ້າສາສນະສຶກສາປະຈຳແຂວງ ແລະຫົວຫນ້າທັມມະການແຂວງ ທົ່ວພຣະຣາຊອານາຈັກ ປະຈຳປີ ໑໙໗໔ ນີ້ນັບວ່າເປັນສົງຄະສັນນິບາດທີ່ມີຄວາມຫມາຍສຳຄັນຍິ່ງ ໃນວົງການພຣະພຸທສາສນາຂອງເຮົາ ເພາະໄດ້ເປີດຂຶ້ນໃນຍຸກເຣີ່ມຕົ້ນແຫ່ງສັກຣາດໃຫມ່ ແລະໃນຂນະທີ່ປະເທດຊາດກຳລັງໄດ້ຮັບສັນຕິພາບຊຶ່ງພີ່ນ້ອງລາວທັງສອງຝ່າຍໄດ້ຕົກລົງປົງໃຈກັນເຊັນສັນຍາ ແລະອະນຸສັນຍາ ຈັດຕັ້ງຣັຖບານປະສົມຊົ່ວຄາວແຫ່ງຊາດ ແລະຄນະມົນຕຣີປະສົມການເມືອງຂຶ້ນເພື່ອບໍຣິຫານປະເທດຊາດໃຫ້ດຳເນີນໄປຕາມເສັ້ນທາງສັນຕິພາບ ເອກຣາດເປັນກາງ ປະຊາທິປະໄຕ ແລະເອກພາບຕາມໂຄງການການເມືອງທີ່ໄດ້ວາງກຳນົດໄວ້.

ໃນໂອກາດດຽວກັນນີ້ ພຣະສົງທັງສອງເຂດກໍໄດ້ເຂົ້າຮ່ວມປະຊຸມໃນວົງການອັນດຽວກັນທີ່ເຕັມໄປດ້ວຍບັນຍາກາດອັນອົບອຸ່ນທີ່ສຸດ.

ດັ່ງນັ້ນ ຈຶ່ງເຫັນສົມຄວນຮວບຮວມເອກສານສຳຄັນກ່ຽວກັບການປະຊຸມຫລວງຄັ້ງນີ້ໄວ້ໃນຂ່າວສບັບພິເສດຂອງກະຊວງທັມມະການເພື່ອປະໂຍດໃນການສຶກສາຄົ້ນຄວ້າ ແລະ ນຳເອົາໄປພິຈາຣະນາໄຕ່ຕອງຕາມແນວທາງນະໂຍບາຍສ່ວນໃຫຍ່ໃນພາກປະຕິບັດຕົວຈິງໃຫ້ບັງເກີດຜົນສົມຄວາມຄາດຫມາຍທຸກປະການ ທັງນີ້ກໍເພື່ອເຊີດຊູຊາດ ແລະ ພຸທສາສນາຂອງເຮົາໃຫ້ຈະເຣີນຮຸ່ງເຮືອງຕາມພຣະຣາຊປະສົງຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດ ຕາມຄວາມມຸ້ງຫມາຍຂອງຣັຖບານ ແລະຂອງປະຊາຊົນລາວທົ່ວພຣະຣາຊອານາຈັກ.

ນອກນີ້ຍັງຈະໃຊ້ເປັນບັນທຶກພື້ນຖານໃນການປະເມີນຜົນງານເພື່ອປັບປຸງການປະຊຸມຫລວງຄັ້ງໃຫມ່ໃຫ້ດີຂຶ້ນຕາມລຳດັບຕໍ່ໆໄປດ້ວຍ.

ວຽງຈັນ, ວັນທີ່ ໙ ທັນວາ (໑໔) ໑໙໗໔.

ກະຊວງທັມມະການ;

## ສ າ ຣ ະ ບ າ ນ

-:-:-:-:-:-


- ລາຍການ ປະຊຸມຫລວງ ພຣະອາດຍາສິດສົງ ທົ່ວພຣະຣາຊອານາຈັກລາວ ...... ຫນ້າ ໑
- ວາຣະການປະຊຸມ ພຣະອາດຍາສິດສົງ .......................... " ໕
- ຣະບຽບ ການປະຊຸມຫລວງ ພຣະອາດຍາສິດສົງ ......................... " ໖
- ລາຍງານການປະຊຸມຫລວງ ພຣະອາດຍາສິດສົງ ກ່າວໂດຍ ຂັນທອງ ທັມມະວົງສ໌, ອະທິບໍດີ ປະຈຳກະຊວງທັມມະການ ............................. " ໗
- ພຣະໂອວາດ ໃຂກອງປະຊຸມສົງ ປະຈຳປີພຸທສັກຣາດ ໒໕໑໗ ຂອງ ອົງສົມເດັດພຣະ ສັງຄະຣາຊ .......................................... " ໙
- ຄຳປາໄສ ກ່າວໃຂປະຊຸມ ທັມມະການແຂວງ ມື້ວັນເສົາ ທີ່ ໒/໑໑/໗໔ ກ່າວ ໂດຍ ຂັນທອງ ທັມມະວົງສ໌, ອະທິບໍດີ ປະຈຳກະຊວງທັມມະການ ......... " ໑໐
- ມະຕິຮວມ ຂ ອ ງ ຄ ນ ະ ສົ ງ ............................ " ໑໒
- ມະຕິຮວມ ຣະຫວ່າງກະຊວງທັມມະການ ແລະ ທັມມະການແຂວງ ............ " ໑໓
- ລາຍງານການປະຕິບັດງານ ຂອງກະຊວງທັມມະການ ໃນນຶ່ງປີ ທີ່ຜ່ານມາ ກ່າວໂດຍ ພຍາສຸກັນ ວິໄລສາຣ, ຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ ............ " ໑໖
- ສູນທອນພົດ ຖແລງນະໂຍບາຍ ແລະ ໂຄງການສົ່ງເສີມ ກິຈການດ້ານພຣະພຸທສາສນາ ຂອງ ຣັຖມົນຕຣີ ວ່າການກະຊວງທັມມະການ ....................... " ໒໑
- ພຣະໂອວາດ ອັດກອງປະຊຸມສົງ ປະຈຳປີ ພຸທສັກຣາດ ໒໕໑໗ ຂອງອົງສົມເດັດພຣະ ສັງຄະຣາຊ ໃນວັນທີ່ ໔ ພຶສຈິກາ ໑໙໗໔ ...................... " ໓໒


-=$$$$$$$$$$$$$$$=-

# <u>ລາຍການປະຊຸມຫລວງ</u>

ພຣະອາດຍາສົດສົງ, ຄນະທີ່ປຶກສາສົງ, ຄນະກັມມາທິການບໍຣິຫານສົງ, ເຈົ້າຄນະແຂວງ, ພຣະອາຈານ ຫົວຫນ້າສາສນະສຶກສາປະຈຳແຂວງ ແລະ ຫົວຫນ້າທັມມະການແຂວງ ທົ່ວພຣະຣາຊອານາຈັກລາວ

ປ ະ ຈ ຳ ປີ ໑ ໙ ໗ ໔

ທີ່ <u>ນະຄອນວຽງຈັນ</u>

- <u>ພາກທີ່ຫນຶ່ງ</u>
- <u>ສຖານທີ່ປະຊຸມ</u> : ມະຫາກູດີທາດຫລວງ
- <u>ວັນສຸກ, ທີ່ ໑ ພິສຈິກາ (໑໑) ໑໙໗໔ ກົງກັບເດືອນ ໑໔ ແຮມ ໔ ຄ່ຳ</u>.

໐໘.໔໕ = ໂຮມ
- ທ່ານຫົວຫນ້າທັມມະການແຂວງທຸກໆແຂວງ
- ທ່ານຫົວຫນ້າຫ້ອງການສຶກສາສົງ
- ທ່ານຫົວຫນ້າຫ້ອງການແບບຣຽນ
- ທ່ານຫົວຫນ້າຫ້ອງການສົ່ງເສີມສາສນາ
- ທ່ານຫົວຫນ້າຫ້ອງການກິຈການທົ່ວໄປ
- ທ່ານຫົວຫນ້າຫ້ອງການສມຸດບັນຊີ
- ທ່ານຫົວຫນ້າຫ້ອງການທະບຽນຂ້າຣາຊການ
- ທ່ານຫົວຫນ້າຫ້ອງການຄົ້ນຄວ້າສ້າງສາ
- ທ່ານຫົວຫນ້າຫ້ອງການບູຮານຄະດີ
- ທ່ານຫົວຫນ້າຫ້ອງການຂ່າວ (ຈົດບັນທຶກປະຊຸມສົງທຸກໆຄັ້ງ)
- ທ່ານອະທິບໍດີກົມສາສນະສຶກສາ
- ທ່ານອະທິບໍດີກົມບູຮານຄະດີ
- ທ່ານອະທິບໍດີກົມສາສນາ
- ທ່ານຫົວຫນ້າສຳນັກງານຣັຖມົນຕຣີ ວ່າການກະຊວງທັມມະການ
- ທ່ານຫົວຫນ້າສຳນັກງານຣັຖມົນຕຣີ ຊ່ວຍວ່າການກະຊວງທັມມະການ
- ຄນະຄົ້ນຄວ້າຊ່ວຍວຽກສຳນັກງານ ຣັຖມົນຕຣີກະຊວງທັມມະການ
- ພຣະອາຈານຜູ້ຊົງຄູນວຸດທິ
- ພຣະອາຈານຫົວຫນ້າພແນກສາສນະສຶກສາ ປະຈຳແຂວງທຸກໆແຂວງ
- ພຣະເຖຣະຊັ້ນຜູ້ໃຫຍ່ຝ່າຍບັນດາກຳລັງຣັກຊາດ
- ພຣະຫລັກຄຳ ເຈົ້າຄນະແຂວງທຸກໆແຂວງ

..

໐໘.໓໐ - ຄນະກັມມາທິການບໍຣິຫານສົງ ແລະຄນະທີ່ປຶກສາສົງ ມາເຖິງ

໐໘.໔໕ - ອົງສົມເດັດພຣະສັງຄະຣາຊ ສເດັດມາເຖິງ, ຕິດຕາມດວຍພຣະລູກແກວ ຄຳຝັ້ນ ສີລະສັງວະໂຣ, ປະທານທີ່ປຶກສາສົງ - ພຣະຫລັກຄຳຈັນທະບູຣີເມທາຈານ, ປະທານຄນະກັມມາທິການບໍຣິຫານສົງ, ເຈົ້າຄນະແຂວງວຽງຈັນ ແລະ ທານອະທິບໍດີປະຈຳກະຊວງທັມມະການ.

- ພນະທານຣັຖມົນຕຣີ ແລະ ພນະທານຣັຖມົນຕຣີຊ່ວຍວ່າການ ກະຊວງທັມມະການ ຖວາຍຄວາມເຄົາຣົບ ແລະ ອາຣາທນານິມົນພຣະອົງເຂົ້າຫອງປະຊຸມ.
- ຈຸດທູບທຽນ, ໄຫວພຣະຣັຕນະໄຕຣ.
- ອົງສົມເດັດພຣະສັງຄະຣາຊ ກາວໃຂປະຊຸມ ແລ້ວສເດັດກັບ
- ພນະທານຣັຖມົນຕຣີ ແລະ ພນະທານຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ ເດີນທາງກັບ
- ພຣະລູກແກວ ຄຳຝັ້ນ ສີລະສັງວະໂຣ, ປະທານທີ່ປຶກສາສົງນັ່ງເປັນປະທານຕໍ່ໄປ
- ທານອະທິບໍດີປະຈຳກະຊວງທັມມະການກາວຊີ້ແຈງຣະບຽບການປະຊຸມ
- ຄນະກັມມາທິການບໍຣິຫານສົງ ສເນີຜົນງານປີທີ່ຜານມາ
- ເຈົ້າຄນະແຂວງກາວລາຍງານຜົນງານພາຍໃນແຂວງຂອງຕົນ (ຕາມລຳດັບແຂວງເໜືອລົງມາ)

໑໑.໐໐ - ຢຸດພັກ

໑໔.໐໐ - ເຈົ້າຄນະແຂວງກາວລາຍງານຜົນງານຕໍ່ຈາກຕອນເຊົ້າ
- ພຣະອາຈານຫົວໜາສາສນະສຶກສາປະຈຳແຂວງຕາງໆ ກາວລາຍງານການດຳເນີນງານ

(ຕາມລຳດັບແຂວງເໜືອລົງມາ)

໑໗.໐໐ - ອັດປະຊຸມ

-ພາກທີ່ສອງ

-ສະຖານທີ່ປະຊຸມ : ມະຫາກູດດີທາດຫລວງ

-<u>ວັນເສົາ ທີ່ ໘ ພິສຈິກາ (໑໑) ໑໙໗໔ ກົງກັບເດືອນ ໑໒ ແຮມ ໓ ຄ່ຳ</u>

໐໘.໔໕ =ໂຮມ-ພຣະອາຈານຜູ້ຊົງຄູນວຸດທິ
- ພຣະອາຈານຫົວໜາພແນກສາສນະສຶກສາປະຈຳແຂວງທຸກໆແຂວງ
- ພຣະເຖຣະຊັ້ນຜູ້ໃຫຍຝາຍບັນດາກຳລັງຣັກຊາດ
- ພຣະຫລັກຄຳເຈົ້າຄນະແຂວງທຸກໆແຂວງ
- ຄນະກັມມາທິການບໍຣິຫານສົງ
- ຄນະທີ່ປຶກສາສົງ

໐໙.໓໐ - ພຣະລູກແກວ ຄຳຝັ້ນ ສີລະສັງວະໂຣ ປະທານທີ່ປຶກສາສົງ, ປະທານທີ່ປຶກສາສົງ, ປະທານກອງປະຊຸມ ມາເຖິງ
- ຈຸດທູບທຽນ, ໄຫວພຣະຣັຕນະໄຕຣ
- ປະທານກອງປະຊຸມ ກາວໃຂປະຊຸມ

<u>ວາລະການປະຊຸມ</u> :

໑/- ການປົກຄອງສົງ -ບັນຫາຂັດຂ້ອງ-ວິທີການແກ້ໄຂ-ໂຄງການປະຕິບັດ
໒/- ການເຜີຍແຜ່ສິລທັມ " ງານຕໍ່ໄປ
໓/- ການສຸກສາສົງ "
໔/- ການກໍ່ສາງບູຣະນະວັດວາອາຣາມແລະບູຮານຄະດີ "

໑໑.໐໐ - ຢຸດພັກ

໑໔.໐໐ - ພິຈາຣະນາຕໍ່ຈາກຕອນເຊົ້າ ແລະ ຣ່າງມະຕິ

໑໗.໐໐ - ອັດປະຊຸມ

<u>ພາກສອງ</u>

<u>ສະຖານທີ່ປະຊຸມ</u> : ຫ້ອງປະຊຸມກະຊວງທັມມະການ

໐໘.໑໕ = ໂຮມ - ຫົວໜ້າທັມມະການແຂວງທຸກໆແຂວງ
- ທ່ານຫົວໜ້າຫ້ອງການຕ່າງໆ ພາຍໃນກະຊວງທັມມະການ, ກົມສາສນະສຶກສາ, ກົມບູຮານຄະດີແລະກົມສາສນາ (ຫົວໜ້າຫ້ອງການກິຈການທົ່ວໄປຈົດບັນທຶກປະຊຸມ)

໐໘.໒໕ - ທ່ານອະທິບໍດີກົມສາສນະສຶກສາ
- ທ່ານອະທິບໍດີກົມບູຮານຄະດີ
- ທ່ານອະທິບໍດີກົມສາສນາ
- ທ່ານຫົວໜ້າສຳນັກງານຣັຖມົນຕຣີວ່າການກະຊວງທັມມະການ
- ທ່ານຫົວໜ້າສຳນັກງານຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ
- ຄະນະຄົນຄວ້າຊ່ວຍວຽກສຳນັກງານຣັຖມົນຕຣີກະຊວງທັມມະການ ມາເຖິງ

໐໘.໓໐ - ທ່ານອະທິບໍດີປະຈຳກະຊວງທັມມະການ, ປະທານກອງປະຊຸມ ມາເຖິງ ແລະກ່າວໄຂປະຊຸມ
- ຫົວໜ້າທັມມະການແຂວງຕ່າງໆ ກ່າວລາຍງານການດຳເນີນງານ ພາຍໃນແຂວງຂອງຕົນ ( ຕາມລຳດັບແຂວງເໜືອລົງມາ ).

໑໒.໐໐ - ຢຸດພັກ
໑໔.໐໐ - ພິຈາຣະນາບັນຫາຕ່າງໆ ຕາມວາຣະປະຊຸມ ແລະ ຣ່າງມະຕິ
໑໗.໐໐ - ອັດປະຊຸມ

<u>ວັນອາທິດ, ທີ ໓ ພິສຈິກາ(໑໑)໑໙໗໕ ກົງກັບເດືອນ ໑໒ ແຮມ ໔ ຄ່ຳ</u>(ທີ່ຫ້ອງປະຊຸມກະຊວງທັມມະການ)

໐໘.໓໐ - ຄນະກັມມາທິການບໍຣິຫານສົງ ( ໔ ອົງ )
- ອະທິບໍດີປະຈຳກະຊວງ ພ້ອມດ້ວຍອະທິບໍດີກົມຕ່າງໆ, ຫົວໜ້າສຳນັກງານຣັຖມົນຕຣີ, ຣັຖມົນຕຣີຊ່ວຍວ່າການ ແລະ ຄນະຄົນຄວ້າຊ່ວຍວຽກສຳນັກງານ ຮຽບຮຽງຮ່າງມະຕິຂອງຄນະສົງ ແລະ ທັມມະການແຂວງ ເພື່ອສເນີ ຕໍ່ພະນະທ່ານຣັຖມົນຕຣີແລະຣັຖມົນຕຣີ ຊ່ວຍວ່າການກະຊວງທັມມະການ.

. . .

- ຫົວໜ້າຫ້ອງການຂ່າວ ແລະຫົວໜ້າຫ້ອງການກິຈການທົ່ວໄປຈັດພິມມະຕິທັງສອງສບັບ.

໑໒.໐໐ - ຢຸດພັກ

໑໔.໐໐ - ພນະທ່ານຣັຖມົນຕຣີ ແລະ ຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ ຮ່ວມກັບອະທິບໍດີປະຈຳກະຊວງ, ອະທິບໍດີກົມຕ່າງໆ, ຫົວໜ້າສຳນັກງານຣັຖມົນຕຣີແລະຣັຖມົນຕຣີຊ່ວຍວ່າການ ແລະຄນະຄົນຄວ້າຊ່ວຍວຽກສຳນັກງານຣັຖມົນຕຣີກະຊວງທັມມະການ

- ສຶກສາຄົ້ນຄວ້າມະຕິຂອງຄນະສົງແລະທັມມະການແຂວງເພື່ອຊີ້ແຈງໃນກອງປະຊຸມຫລວງ

໑໗.໐໐ - ຢຸດພັກ

<u>ພາກທີ່ສາມ</u>

<u>ສຖານທີ່ປະຊຸມ</u> : ມະຫາກູດິທາດຫລວງ

<u>ວັນຈັນ, ທີ່ ໔ ພິສຈິກາ (໑໑) ໑໙໗໔ ກົງກັບເດືອນ ໑໒ ແຮມ ໕ ຄ່ຳ</u>

໐໘.໐໐ = ໂຮມ - ທ່ານຫົວໜ້າທັມມະການແຂວງທຸກໆແຂວງ
- ທ່ານຫົວໜ້າສຳນັກງານຣັຖມົນຕຣີວ່າການກະຊວງທັມມະການ
- ທ່ານຫົວໜ້າສຳນັກງານຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ
- ຄນະຄົນຄວ້າຊ່ວຍວຽກສຳນັກງານຣັຖມົນຕຣີກະຊວງທັມມະການ
- ທ່ານອະທິບໍດີກົມສາສນາ
- ທ່ານອະທິບໍດີກົມສາສນະສຶກສາ
- ທ່ານອະທິບໍດີກົມບູຮານຄະດີ

໐໘.໒໕ -ພຣະອາຈານຜູ້ຊົງຄຸນວຸດທິ
- ພຣະອາຈານຫົວໜ້າຜູ້ແນກສາສນະສຶກສາ ປະຈຳແຂວງທຸກໆແຂວງ
- ພຣະເຖຣະຊຸມຜູ້ໃຫຍ່ຝ່າຍບັນດາກຳລັງຮັກຊາດ
- ພຣະຫລັກຄຳເຈົ້າຄນະແຂວງທຸກໆແຂວງ
- ຄນະກັມມາທິການບໍຣິຫານສົງ
- ຄນະທີ່ປຶກສາສົງ ມາເຖິງ

໐໘.໓໕ - ພນະທ່ານຣັຖມົນຕຣີ ແລະ ພນະທ່ານຣັຖມົນຕຣີຊ່ວຍວ່າການກະຊວງທັມມະການມາເຖິງ

໐໘.໔໕ - ອົງສົມເດັດພຣະສັງຄະຣາຊສເດັດມາເຖິງ (ຕິດຕາມດ້ວຍພຣະລູກແລ້ວ ຄຳຝັ້ນ ສີລະສັງວະໂຣ, ປະທານທີ່ປຶກສາສົງ, ພຣະຫລັກຄຳຈັນທະບູຣີ ເມທາຈານ, ປະທານຄນະກັມມາທິການບໍຣິຫານສົງ, ເຈົ້າຄນະແຂວງວຽງຈັນ ແລະທ່ານອະທິບໍດີປະຈຳກະຊວງທັມມະການ )

- ພນະທ່ານຣັຖມົນຕຣີ ແລະ ພນະທ່ານຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ ຖວາຍຄວາມເຄົາຣົບ ແລະ ອາຣາທນານິມົນ ພຣະອົງເຂົ້າຫ້ອງປະຊຸມ.

- ຈຸດທູບທຽນ, ໄຫວ້ພຣະຣັຕນະໄຕຣ.

.. ..

- ອົງສົມເດັດພຣະສັງຄະຣາຊ ກ່າວໄຂກອງປະຊຸມຫລວງ
- ພຣະລູກແກວ ຄຳຝັ້ນ ສີລະສັງວະໂຣ, ປະທານທີ່ປຶກສາສົງ ກ່າວລາຍງານການປະຊຸມສົງ ແລະ ສເນີມະຕິ.
- ທານອະທິບໍດີ ປະຈຳກະຊວງທັມມະການ ກ່າວລາຍງານການປະຊຸມຄນະກັມມະການ ແຂວງ ແລະ ສເນີມະຕິ.
- ພນະທ່ານຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ ກ່າວຊີ້ແຈງມະຕິຂອງຄນະສົງ ແລະ ຄນະທັມມະການແຂວງ.
- ພນະທ່ານຣັຖມົນຕຣີວ່າການກະຊວງທັມມະການ ຖແລງແຜນນະໂຍບາຍທົ່ວໄປ ຂອງ ກະຊວງທັມມະການ.

໑໐.໓໐ - ອົງສົມເດັດພຣະສັງຄະຣາຊ ກ່າວອັດປະຊຸມ.

໑໑.໐໐ - ພນະທ່ານຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ ຖວາຍເພັນ ແດ່ອົງສົມເດັດພຣະ ສັງຄະຣາຊ ແລະພຣະເຖຣະທີ່ເຂົ້າຮວມປະຊຸມຫລວງ ທີ່ເຮືອນຄູນສີຖານເໜືອ.

<u>ວັນອັງຄານ, ທີ່ ៥ ພຶສຈິກາ (໑໑) ໑໙໗៥ ກົງກັບເດືອນ ໑໘ ແຮມ ໖ ຄ່ຳ.</u>

໑໐.໓໐ - ພນະທ່ານຣັຖມົນຕຣີວ່າການກະຊວງທັມມະການ ຖວາຍເພັນແດ່ ອົງສົມເດັດພຣະ ສັງຄະຣາຊ ແລະ ພຣະເຖຣະທີ່ເຂົ້າຮວມປະຊຸມ ທີ່ເຮືອນຄູນທາດດຳ.

- ຈົບ ລາຍ ການ -

<u>ຊົ້ງເຫັນຊອບແລ້ວ</u>

ຫລວງພຣະບາງ, ວັນທີ່ ໑໑ ຕຸລາ ໑໙໗៥

ສົມເດັດພຣະສັງຄະຣາຊ

ແຫ່ງພຣະຣາຊອານາຈັກລາວ

ລົງພຣະນາມ: ສົມເດັດພຣະພຸທຊິໂນຣົສ

<u>ສົມເດັດພຣະສັງຄະຣາຊທັມມະຍານມະຫາເຖຣະ</u> (<u>ສຸກັນ ວໄລສາຣ</u>)

ວຽງຈັນ, ວັນທີ່ ៣ ຕຸລາ ໑໙໗៥

ສ ເ ນີ ໂ ດ ຍ :

ຣັຖມົນຕຣີຊ່ວຍວ່າການ ກະຊວງທັມມະການ

ເຈົ້າ ພຍາ ສູຣະພົລ ຣາຊພັກດີ ເຊັນ ແລະ ປະທັບຕຣາ

ຣັຖມົນຕຣີວ່າການກະຊວງ ທັມມະການ

<u>ມະຫາກຸ ສູວັນນະເມທີ</u>

<u>ວ າ ຣ ະ ກ າ ນ ປ ະ ຊຸ ມ</u>

໑)- <u>ການປົກຄອງສົງ</u> :

ກ)- ການປະຕິບັດທັມມະວິນັຍ ຂອງພຣະພິກຊຸສົງ,
ຂ)- ກິຈວັດປະຈຳວັນ,
ຄ)- ສັງຄະກັມ ແລະ ສາສນະພິທີ,
ງ)- ການສັມມະນາສົງ,
ຈ)- ພຣະຣາຊ ໂອງການປົກຄອງສົງ(ພິຈາຣະນາດັດແປງແກ້ໄຂຕາມຄວາມ ເໝາະສົມ.

໒)- <u>ການເຜີຍແຜ່ສິລທັມ</u> :

ກ)- ຈຸດປະສົງຂອງການເຜີຍແຜ່ (ຄືເຜີຍແຜ່ສິລທັມໃຫ້ເຂົ້າເຖີງຈິດໃຈຂອງ ປະຊາຊົນ ທຸກຊົນຊັ້ນ ຊົນເຜົ່າ ).

ຂ)- ຣະດັບການຄາດໝາຍຂອງການເຜີຍແຜ່,

ຄ)- ການຈັດຕັ້ງການເຜີຍແຜ່,

ງ)- ຫລັກການເຜີຍແຜ່,

ຈ)- ພິທີການເຜີຍແຜ່.

໓)- <u>ການ ສຶກສາ ສົງ</u> :

ກ)- ວັດຖຸປະສົງຂອງການສຶກສາສົງ,

ຂ)- ຫລັກສູດ ແລະຣະຍະເວລາຮຽນ,

ຄ)- ບັນຫາພຣະຄຣູສອນ,

ງ)- ຣະບຽບວິນັຍຂອງໂຮງຮຽນ (ປະຕິບັດຕາມດຳຣັດສບັບເລກທີ່ ໓໒).

ຈ)- ການຂຍາຍ ແລະຄວາມເປັນເອກພາບຂອງການສຶກສາສົງ.

໔)- <u>ການກໍ່ສ້າງບູຣະນະວັດວາອາຣາມແລະບູຣານະຄະດີ</u>

ກ)- ການສ້າງວັດຂຶ້ນໃຫມ່,

ຂ)- ການບູຣະນະສາງສາວັດວາອາຣາມ,

ຄ)- ການສຳຣວດແລະຮັກສາບູຮານວັດຖຸ, ບູຮານສສຖານ ແລະບູຮານະຄະດີ ຫນັງສືຄັມພີໃບລານຕ່າງໆ,

ງ)- ການຈັດຕັ້ງພິພິທພັນສວນກາງ ແລະ ສ່ວນພູມີພາກ,

ຈ)- ການຂນທະບຽນດິນວັດ ແລະ ທີ່ທໍຣະນີສົງ.

<u>ໝາຍເຫດ</u> : ເພື່ອໃຊ້ເປັນຫລັກຖານການພິຈາຣະນາໃນກອງປະຊຸມ ຂັ້ນແຂວງ ແລະກອງປະຊຸມຫລວງ.

<u>ຣະບຽບ ການປະຊຸມຫລວງ</u>

ພຣະອາດຍາສິດສົງ, ສຶກສາສົງ ແລະ ທັມມະການແຂວງ

ທົ່ວພຣະຣາຊອານາຈັກ

ປະຈຳປີ ໑໙໗໔

-:-:-:-

ເພື່ອຄວາມສັກສິດ ຂອງທັມມະວິໃນອັນສູງສົ່ງ ແລະ ເພື່ອຄວາມເປັນຣະບຽບຮຽບຮ້ອຍ ໃນກອງປະຊຸມຫລວງ ຈຶ່ງໄດກຳໜົດກົດຣະບຽບໄວດັ່ງນີ້ :

໑- ການລາຍງານ ແລະແຖລງປ່ຽນຄຳຄິດຄຳເຫັນ ໃຫ້ຢູ່ໃນຂອບເຂດວາຣະການ ປະຊຸມ ທີ່ໄດກຳນົດໄວແລວນັ້ນທຸກປະການ.

໒- ການກ່າວລາຍງານ ໃຫ້ຈຳກັດເວລາ ບໍ່ກາຍ ໑໕ ນາທີ ຊຶ່ງປະທານ ຈະໄດ້ ກົດກະດິງເປັນສັນຍານ.

໓- ການສເນີ ຄວາມຄິດຄວາມເຫັນ ໃຫ້ຈຳກັດເວລາ ບໍ່ກາຍ ໑໐ ນາທີ ຊຶ່ງປະທານ ຈະໄດກົດກະດິງ ເປັນສັນຍານ.

໔- ພຣະເຖຣະ ຜູ້ຊົງຄຸນວຸດທິ ທີ່ໄດ້ຮັບນິມົນເຂົ້າຮ່ວມປະຊຸມຫລວງ ໃນຖານະຜູ້ສັງເກັດການ ຈະສເນີ ຄວາມຄິດຄວາມເຫັນໄດ ຕາມຄຳອະນຸຍາດ ຂອງປະທານ ທີ່ປະຊຸມ ແຕ່ບໍ່ມີສິດອອກສຽງລົງມະຕິໄດ.

໕- ຫ້າມກ່າວນອກເຣື່ອງ ທີ່ບໍ່ເປັນມົງຄົນ.

ຂໍຈົ່ງປະຕິບັດຕາມ ຢ່າງເຄັ່ງຄັດດ້ວຍ./-

ວຽງຈັນ, ວັນທີ່ ໓໑ ຕຸລາ ໑໙໗໔

<u>ຊົງເຫັນຊອບແລ້ວ</u>

ສົມເດັດພຣະສັງຄະຣາຊ

ແຫ່ງພຣະຣາຊອານາຈັກລາວ

ລົງພຣະນາມ: ສົມເດັດພຣະພຸທຊິໂນຣົສ

<u>ສົມເດັດສັງຄະຣາຊທັມມະຍານະມະຫາເຖຣະ</u>

<u>ສເນີໂດຍ</u> :

ຣັຖມົນຕຣີຊ່ວຍວ່າການ ກະຊວງທັມມະການ

ເຈົ້າ ພຍາ ສຸຣະພົລ ຣາຊພັກດີ

(<u>ສຸກັນ ວິໄລສານ</u>)

ຣັຖມົນຕຣີວ່າການກະຊວງ ທັມມະການ

ເຈົ້າ ແລະປະທັບຕຣາ

<u>ມະຫາ</u>ກູ <u>ສຸວັນນະເມທີ</u>

<u>ລາຍງານການປະຊຸມຫລວງ</u>

ພຣະອາຈາຍາສົກສົງ, ສຶກສາສົງ ແລະທັມມະການແຂວງ ທົ່ວພຣະຣາຊອານາຈັກ

ປະຈຳປີ ໑໙໗໔

(ກ່າວໂດຍ ທ່ານຂັນທອງ ທັມມະວົງສ໌, ອະທິບໍດີປະຈຳກະຊວງທັມມະການ)

ເມື່ອວັນສຸກ, ທີ ໑ ພຶສຈິກາ(໑໑)໑໙໗໔

---------------

- ນ້ອມໄຫວ້ ພຣະຣັຕນະໄຕຣ
- ກາບທູນ ນະມັສການອົງສົມເດັດພຣະສັງຄະຣາຊ
- ນອມນະມັສການ ພຣະເຖຣານຸເຖຣະ

ຮຽນ - ພະນະທ່ານຣັຖມົນຕຣີ

ພະນະທ່ານຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ, ທີ່ເຄົາຣົບຢ່າງສູງ

- ບັນດາທ່ານອະທິບໍດີ
- ທ່ານຫົວໜ້າສຳນັກງານ
- ຄະນະຄົນຄວາ
- ທ່ານຫົວໜ້າທັມມະການແຂວງ
- ທ່ານຫົວໜ້າຫ້ອງການ ນັກຮົບແພງແລະມັບຖື,

ການປະຊຸມຫລວງພຣະອາຈາຍາສົກສົງ, ທີ່ປຶກສາສົງ, ກັມມາທິການບໍຣິຫານສົງ, ພຣະອາຈານຫົວໜ້າສູນສຶກສາປະຈຳແຂວງ ແລະຫົວໜ້າທັມມະການແຂວງ ທົ່ວພຣະຣາຊອານາຈັກ ປະຈຳປີ ໑໙໗໔ ນີ້ ແມ່ນປະເພນີທີ່ເຄີຍໄດ້ປະຕິບັດມາທຸກໆປີ ໃນໂອກາດບຸນນະມັສການພຣະທາດຫລວງ ແຕ່ປີນີ້ໄດ້ຈັດກອງປະຊຸມຫລວງຂຶ້ນ ລູນຫລັງບຸນທາດຫລວງ ກໍເນື່ອງຈາກວ່າ ກ່ອນໜ້າບຸນທາດຫລວງນັ້ນ ກະ

ຊວງມະຫາດໄທ ໄດ້ຈັດກອງປະຊຸມຫລວງເຈົ້າແຂວງ ທົ່ວພຣະຣາຊອານາຈັກອີກ ໂດຍມີບັນດາອູະທິບໍດີປະຈໍາກະຊວງທຸກໆກະຊວງເຂົ້າຮ່ວມ ເພື່ອພິຈາຣະນາບັນຫາການປະສານງານດ້ານຕ່າງໆ ໃຫ້ຈະເຣີນກ້າວໜ້າ ແລະສອດຄ່ອງກັບນະໂຍບາຍຂອງຣັຖບານປະສົມຊຸດຊາວແຫ່ງຊາດ, ຊຶ່ງອະທິບໍດີປະຈໍາກະຊວງທັມມະການ ກໍໄດ້ມີໂອກາດເຂົ້າຮ່ວມຊີ້ແຈງເຖິງພາຣະໜ້າທີ່ ອັນໜັກໜ່ວງກວ້າງໃຫຍ່ຂອງກະຊວງທັມມະການ ແລະຄວາມສໍາຄັນອັນຍິ່ງໃຫຍ່ຂອງພຣະພຸທສາສນາ ອັນເປັນສາສນາຂອງຊາດ ໂດຍມີອົງສົມເດັດພຣະສັງຄະຣາຊ ຊຶ່ງເປັນປະມຸກສົງ ແລະພຣະບາດສົມເດັດພຣະເຈົ້າມະຫາຊີວິດ ຊຶ່ງເປັນອົງເອກອັຄສາສນູປະຖັມ. ພອມກັນນັ້ນ ກໍໄດ້ຂໍໃຫ້ເຈົ້າໜ້າທີ່ປົກຄອງແຂວງທັງຫລາຍ ໄດ້ພ້ອມພາກັນໃຫ້ການຮ່ວມໄມ້ຮ່ວມມືເພີ່ມຍິ່ງຂຶ້ນ ໃນການສົ່ງເສີມແລະອຸປະຖັມຄໍ້າຊູພຣະພຸທສາສນາ ໃຫ້ຈະເຣີນການຮຸ່ງເຮືອງເຫລືອງເຫລື້ອມ ສີບຢາວເຢືອ ສູດຊົ່ວກາລນານ.

ການປະຊຸມຫລວງຄນະສົງ ແລະທັມມະການແຂວງປີນີ້ ໄດ້ຈັດຂຶ້ນທ່າມກາງປີສັນຕິພາບ ທີ່ປະຊາຊົນທັງຊາດໄດ້ພ້ອມພາກັນສາງຂຶ້ນມາດ້ວຍການເສັຽສລະອັນໃຫຍ່ຫລວງ ຊຶ່ງໄດ້ຮັບຄວາມຍົກຍ້ອງຈາກມວນຊົນທົ່ວໂລກ.

ອີກປະການໜຶ່ງ ກະຊວງທັມມະການກໍໄດ້ອາຣາທນານິມົນ ພຣະເຖຣານູເຖຣະຊັ້ນຜູ້ໃຫຍ່ ຝ່າຍບັນດາກໍາລັງຣັກຊາດ ມາຮ່ວມເພື່ອພິຈາຣະນາແລກປ່ຽນຄໍາຄິດຄໍາເຫັນ ຊ່ວຍກັນປັບປຸງແກ້ໄຂ ສິ່ງທີ່ຂາດຕົກບົກພ່ອງ ແລະສົ່ງເສີມສິ່ງທີ່ຈົບງາມແລວມັ່ນໃຫ້ໝັ້ນຄົງຖາວອນ ອັນສແດງເຖິງຄວາມເປັນເອກພາບໃນການອຸປະຖັມຄໍ້າຊູ ພຣະພຸທສາສນາ ໃຫ້ເປັນຮົ່ມໂພຮົ່ມໄຊ ແກ່ມະນຸສໂລກສືບໄປ.

ສຸດທ້າຍນີ້ ຂໍອວຍພອນໃຫ້ກອງປະຊຸມຫລວງປະຈໍາປີ ໑໙໗໔ ຈົ່ງບັນລຸເຖິງຜົນສໍາເຣັດ ສົມຄວາມມຸ້ງມາດປາຖນາ ທຸກປະການດ້ວຍເທີ້ນ./.

ພຣະໂອວາທໄຂກອງປະຊຸມສົງຄ໌ປະຈໍາປີພຸທສັກຣາຊ ໒໕໑໗

- ຂອງ -

ອົງຄ໌ສົມເດັດພຣະພຸທຊິໂນຣົສ ສະກົລມະຫາສັງຄະປາໂມກຂະ

ສົມເດັດພຣະສັງຄະຣາຊ ທັມມະຍານະມຫາເຖຣະ

ທີ່ຫ້ອງປະຊຸມມະຫາກູຕິ ວັດພຣະທາຕຫລວງ ພຣະນະຄອນວຽງຈັນ

ວັນທີ ໑ ພຶສຈິກາ ພ.ສ. ໒໕໑໗ - ໑໙໗໔

-:-:-:-:-:-:-

ພຣະເຖຣານູເຖຣະ ທີ່ຮັກແພງ ທັງຫລາຍ.

ຈະເຣີນພອນ ພນະທ່ານ ແລະ ທ່ານຜູ້ມີກຽດ.

ກ່ອນອື່ນ ຂ້າພະເຈົ້າຂໍເວລາ ນໍາບັນດາທ່ານທີ່ມາຮ່ວມເປັນກຽດ ໃນພິທີໄຂກອງປະຊຸມສົງປະຈໍາປີ ອັນເປັນກອງປະຊຸມຄັ້ງສໍາຄັນນີ້ ຈັກ ໑ ນາທີ ຂໍໃຫ້ພວກເຮົາສງົບຈິດແຜ່ເມຕຕາ ໂດຍບໍ່ມີຂອບເຂດແດ່ເພື່ອນຮ່ວມຊາຕແລະຮ່ວມໂລກ ທັງຝ່າຍຄະລີທັດແລະຊູມະສົງ ຜູ້ໄດ້ເສັຽສລະທຸກສິ່ງທຸກຢ່າງ ຈົນຮອດເລືອດເນື້ອແລະຊີວິດ ອຸທິສໃຫ້ຊາຕລາວເຮົາໄດ້ຮັບຄວາມສງົບສຸຂ ຄວາມຖືກຕ້ອງປອງດອງຊາຕ ອັນນັບວ່າເປັນຄວາມເສັຽສລະທີ່ຍາກຍິ່ງ ... ( ສງົບ ໑ ນາທີ ).

ກ່ອນທີ່ຈະໄດ້ປຶກສາຫາລືວຽກການ ໃນພາຣະໜ້າທີ່ຮັບຜິດຊອບຂອງພວກເຮົາຕໍ່ໄປ ຂ້າພະ

ເຈົ້າມີຄວາມໂສມະນັສເປັນອັນມາກ ຕໍ່ເພື່ອນສະຫະທັມມິກຂອງພວກເຮົາ ໄດ້ຈາກພວກເຮົາໄປປະຕິບັດສາສນະກິດ ຢູ່ໃນເຂດປົດປ່ອຍຂອງແນວລາວຮັກຊາດ ເປັນເວລາເຖິງສິບກວ່າປີມາແລ້ວ ບັດນີ້ ເພື່ອນສະພຣົມມະຈາຣີນັ້ນ ຈຳນວນໜຶ່ງກໍໄດ້ມາຮ່ວມປະຊຸມສົງຄົ້ງນີ້ດ້ວຍ ໕ ອົງຄ໌.

ຂ້າພະເຈົ້າຂໍປະກາດວ່າ ກອງປະຊຸມສົງຄົ້ງນີ້ ມີຄວາມສຳຄັນຍິ່ງໃຫຍ່ຂອງພຣະພຸທສາສນາລາວເຮົາ ຍອມວ່າໄດ້ຖືກຈັດຂຶ້ນເທິງພື້ນຖານແຫ່ງຄວາມຖືກຕ້ອງປອງດອງຊາດ ໃນໂອກາດທີ່ພົ້ນລາວທຸກກ້ຳທຸກຝ່າຍສາມາດຝັ້ນຜາຊູ່ປະສັກແລະຄວາມເຂົ້າໃຈຜິດຊຶ່ງກັນແລະກັນໄດ້ ແລ້ວມາຮ່ວມກັນສ້າງສາຄວາມວຸດທິຈຳເຣີນແລະຄວາມໝັ້ນຄົງຖາວອນໃຫ້ແກ່ປະເທດຊາດແລະພຣະພຸທສາສນາອັນເປັນມິ່ງຂວັນຂອງລາວເຮົາ.

ອັນນີ້ ແມ່ນຖືກກັບພຣະພຸທທະວະຈະນະທີ່ວ່າ ສາມັຄຄີ ວຸດທິສາທິກາ ຄວາມຖືກຕ້ອງປອງດອງກັນຍ່ອມສ້າງສັນແຕ່ຄວາມວຸດທິຈຳເຣີນໃຫ້ແກ່ສັງຄົມ.

ດັ່ງນັ້ນ ການທີ່ຈະປົກປັກຮັກສາໝາກພົນແຫ່ງຄວາມສາມັກຄີ ຖືກຕ້ອງປອງດອງກັນນີ້ໄວ້ໃຫ້ຍືນຍາວຕລອດໄປໄດ້ ເຮົາກໍຕ້ອງມີຫລັກທັມຢູ່ສອງປະການຖືເປັນຫລັກປະຕິບັດ ຢ່າງເປັນຊີວິດຈິດໃຈ ຄື :

໑/- ສີລະ ສາມັນຍະຕາ : ການຖືສີລປະຕິບັດສິກຂາບົດວິນັຍ ແລະຣະບຽບກົດໝາຍ ຕລອດຮີດຄອງປະເພນີອັນດີງາມຂອງສັງຄົມໃຫ້ທ່ຽມກັນ.

໒/- ທິດຖິ ສາມັນຍະຕາ : ການສຶກສາຄົ້ນຄ້ວາ ພຸຍາຍາມໃຫ້ເຂົ້າໃຈຊຶ່ງກັນແລະກັນ ໃຫ້ມີແນວຄວາມຄິດສອດຄ່ອງຕ້ອງກັນ ຕາມຈຸດໝາຍປາຍທາງແຫ່ງພຣະພຸທສາສນາ ແມ່ນຕ້ອງການໃຫ້ມວນມະນຸສມີຄວາມສຸຂ ໃຫ້ພົ້ນທຸກທັງໃນໂລກນີ້ແລະໂລກໜ້າ.

ເມື່ອພວກເຮົາບໍ່ວ່າຈະເປັນພຣະສົງ ຫລືຄະລືຫັດ ປະຕິບັດໃຫ້ເປັນຜົລຕາມຫລັກທັມສອງປະການດັ່ງທີ່ກ່າວມາແລ້ວຂ້າງເທິງນີ້ ສັງຄົມເຮົາທັງຝ່າຍອານາຈັກ ແລະ ພຸທຈັກ ແມ່ນໝັ້ນຄົງຖາວອນ ແລະການກ້າວຮຸ່ງເຮືອງເປັນແນ່ແທ້.

ບັນດາພຣະເຖຣານຸເຖຣະ ພຣະທ່ານ ແລະ ທ່ານຜູ້ມີກຽດ.

ຂ້າພະເຈົ້າກໍ່ເຖົ້າແກ່ຊະຣາອາຍຸ ໘໐ ປີແລ້ວ ເມື່ອມາເຫັນຄວາມຖືກຕ້ອງປອງດອງເປັນອັນໜຶ່ງອັນດຽວກັນ ຂອງລູກບ້ານຫລານເມືອງດັ່ງນີ້ ສຸດແສນທີ່ຂ້າພະເຈົ້າດີໃຈ ເປັນສຸຂໃຈສຸດທີ່ຈະບອກໄດ້ ຂໍທຸກຝ່າຍຈົ່ງໄດ້ຮັບເອົາຄວາມຮັກແພງ ຄວາມປາຖນາດີ ຈາກໃຈຈິງຂອງຂ້າພະເຈົ້າອີກເທື່ອໜຶ່ງດ້ວຍ.

ຂ້າພະເຈົ້າ ຂໍຮ້ອງຕໍ່ລູກບ້ານຫລານເມືອງອີກຄັ້ງໜຶ່ງ ທັງຝ່າຍຄະລືຫັດ ແລະຄູນະສົງຄ໌ ຂໍຈົ່ງໄດ້ຊ່ວຍກັນຮັກສາຜົລປະໂຍດແຫ່ງກັນດີ ທີ່ພວກເຮົາໄດ້ພ້ອມກັນຍືນຂວາຍປະຕິບັດທັມ ໄດ້ມາດ້ວຍຄວາມລຳບາກຍາກຍິ່ງ ຄື ສັນຕິພາບ ຄວາມສງົບສຸຂ ແລະ ສາມັກຄີທັມຂອງຊາດບ້ານເມືອງ ໃຫ້ຄົງທົນຖາວອນສືບຕໍ່ໄປ ຈົ່ວຊົ່ວຟ້າດິນສລາຍມູນເໜນ.

ປະເທດຊາດ ແລະພຣະພຸທສາສນາ ໃນພຣະຣາຊອານາຈັກລາວເຮົານີ້ ແມ່ນຕົກຢູ່ໃນກຳມື ຄວາມຮັບຜິດຊອບຂອງພວກເຮົາ ຂ້າພະເຈົ້າບໍ່ຢາກເຫັນຄວາມແບ່ງແຍກຊາດ ກັບ ສາສນາ ອອກຈາກກັນ ເພາະປະເທດຊາດນັ້ນກໍປຽບປຸ່ເໝືອນຮ່າງກາຍ ພຣະພຸທສາສນາກໍ່ຄືຊີວິດຈິດໃຈ ທັງສອງພາກສ່ວນຈະແຍກອອກຈາກກັນບໍ່ໄດ້ ເມື່ອວ່າຮ່າງກາຍເຈັບໄຂ້ໄດ້ປ່ວຍ ຈິດໃຈກໍໄດ້ຮັບຄວາມທຸກທໍຣະມານ ບໍ່ມີຄວາມສຸຂ.

ດັ່ງນັ້ນ ເຮົາຈຶ່ງຈຳຕ້ອງໄດ້ເອົາໃຈໃສ່ບົວຣະບັດທັງຮ່າງກາຍ ແລະຈິດໃຈໃຫ້ສົມບູນດີ ຄູ່ຄຽງກັນໄປ ໃນຍາມທີ່ບ້ານເມືອງມີຄວາມຫຍຸ້ງຍາກ ບ້ານແຕກສະແຊກຂາດ ທີ່ເປັນມາຮອດດຽວນີ້ ພຣະສົງເຮົາແມ່ນຈຳເປັນ ແລະຕ້ອງໄດ້ມີບົດບາດສຳຄັນທີ່ສຸດໃນການຊ່ວຍປິ່ນປົວເຢັຍຢາ ບາດແຜໄພສົງຄາມ ທາງດ້ານຮ່າງກາຍແລະຈິດໃຈ ຮ່ວມກັບຣັຖບານ ໃນການດຳເນີນບົດບາດນັ້ນ ພຣະສົງຈຳຕ້ອງໄດ້ມີການຮຽນຮູ້ ການປະຕິບັດທັມມະໃຫ້ຫລາຍ ໂດຍສະເພາະແມ່ນຂັນຕິ ຄື ການອຸທິສຕົນຊ່ວຍເຫລືອສັງຄົມຄວາມອົດທົນໂດຍປະການທັງປວງນີ້ ຄວາມເສັຽສລະ ແລະການອຸທິສຕົນໃຫ້ແກ່ສັງຄົມ ຕາມອຸດົມການໃນທາງພຣະພຸທສາສນາໃຫ້ຫລາຍ ແລະ ໃຫ້ຫລາຍກວ່າທີ່ເປັນມາກ່ອນແລ້ວນັ້ນ.

ຕາມທີ່ຂ້າພະເຈົ້າເຫັນຢູ່ໃນຂະນະນີ້ ການອຸທິສຕົນຊ່ວຍເຫລືອສັງຄົມນັ້ນ ມັນເປັນຫນ້າທີ່ຂອງພວກເຮົາໂດຍກົງ ແຕ່ພວກເຮົາບໍ່ໄດ້ເຫັນສຳຄັນປານໃດ, ດັ່ງນັ້ນ ຈຶ່ງເປັນໂອກາສໃຫ້ຄົນພາຍ-ນອກເຂົ້າມາແຊກແຊງ ເຂົ້າໄປເຮັດໄປທຳກັນເສັຽ ຄ້າຍຄືເຮົາບໍ່ຮູ້ຈັກກັບບາດແຜນັ້ນ ທີ່ເຮົາເຈັບ ເຮົາຢູ່ດ້ວຍຕົນເອງນັ້ນ ແທ້ ເຖິງແມ່ນຈະເປັນກັມດີມີປະໂຍດແກ່ເຮົາກໍຕາມ ແຕ່ກໍເປັນກັມທີ່ດີ ເປັນຕາຫນ້າຫນ້າຍອາຍຫລາຍສຳຣັບເຮົາ ຜູ້ເປັນລູກສິດຂອງພຣະພຸທອົງ ແລະກຽຕສັກສີຂອງ ປະຊາຊາຕລາວເຮົາດ້ວຍ.

ສນັ້ນ ພຣະສົງລາວເຮົາຈຶ່ງຢູ່ໃນຖານະເປັນແບບຢ່າງ ເປັນໂຄມໄຟດວງໃຫຍ່ສ່ອງທາງແຫ່ງສັນຕິພາບ ແລຄວາມຖືກຕ້ອງປອງດອງຊາຕ ຂອງໂລກທັງປວງ ການພຳເພັງຕົນໄດ້ດັ່ງນີ້ ຈຶ່ງສົມກັບສະມັນຍະນາມ ທີ່ຊາວໂລກເຂົາໄຫວ້ນົບ ໂຄຣົບ ບູຊາ ວ່າເປັນເນື້ອນາບຸນຂອງໂລກນັ້ນໂດຍແນ່ແທ້.

ທ້າຍທີ່ສຸດນີ້ ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມສົງຄັ້ງສຳຄັນນີ້ ຂໍໃຫ້ພົບສຳເຣັດ ອັນເປັນປະໂຍດເກື້ອກູລແກ່ປະເທດຊາຕ ສາສນາຈົ່ງເກີດມີ, ຂໍທຸກທ່ານທີ່ໄດ້ມາຮ່ວມດ້ວຍກູສົລ ເຈຕນານີ້ ຈົ່ງຈຳເຣີນດ້ວຍ ອາຍຸ ວັນນະ ສຸຂະ ພະລະ ທຸກທິພາຣາຕຣີກາລດ້ວຍເທີນ./-

ຄຳປາໃສກ່າວໄຂປະຊຸມ ທັມມະການ ມື້ວັນເສົາ ທີ່ ໘/໑໑/໗໔
ໂດຍທ່ານອັນທອງ ທັມມະວົງສ໌, ອະທິບໍດີ ປະຈຳກະຊວງທັມມະການ.

ບັນດາ ທ່ານອະທິບໍດີ - ທ່ານຫົວຫນ້າສຳນັກງານ - ຄນະຄົ້ນຄວ້າ - ທ່ານຫົວຫນ້າທັມມະການແຂວງ - ທ່ານ ຫົວຫນ້າຫ້ອງການ.

ທີ່ຮັກແພງ ແລະ ນັບຖືທັງຫລາຍ.

ການປະຊຸມຫລວງຄນະສົງ ແລະທັມມະການຮ່ວມກັນ ໃນພາກທີ່ຫນຶ່ງໄດ້ຜ່ານມາແລ້ວ ແຕ່ມື້ວັນສຸກ ທີ່ ໑ ພຶສຈິກາ ໑໙໗໔, ນັ້ນແມ່ນການປະຊຸມພາກທີ່ສອງແບ່ງແຍກຣະຫວ່າງຄນະສົງ ແລະ ທັມມະການ ເພື່ອຄວາມເຫມາະສົມ ໃນການພິຈາຣະນາຄົ້ນຄວ້າ ດ້ານຕ່າງໆກ່ຽວກັບການ ປົກຄອງສົງ, ສຶກສາສົງ ເຜີຍແຜ່ສິລທັມ ແລະການດຳເນີນງານຂອງທັມມະການ ທີ່ມີຫນ້າທີ່ອຸປະຖັມຄ້ຳຊູພຣະພຸທສາສນາຮ່ວມກັບ ພຸທບໍຣິສັດທັງຫລາຍ ຊຶ່ງພວກເຮົາຈະໄດ້ທົບທວນເບິ່ງຜົນງານ ປີທີ່ຜ່ານມາເພື່ອພິຈາຣະນາ ປັບປຸງແກ້ໄຂສິ່ງຂາດຕົກບົກພ່ອງໃຫ້ດີຂຶ້ນ ແລະ ຫາວິທີທາງວາງໂຄງການປະຕິບັດງານຕໍ່ໄປໃຫ້ສອດຄ່ອງກັບແຜນການຂອງ ກະຊວງທັມມະການ ແລະນະໂຍບາຍຂອງຣັຖບານ.

ຫລັງຈາກໄດ້ມີການເຊັນສັນຍາ ແລະ ອະນຸສັນຍາ ຟື້ນຟູສັນຕິພາບຣະຫວ່າງລາວທັງສອງຝ່າຍ ເມື່ອວັນທີ່ ໒໑ ກຸມພາ (໒) ໑໙໗໓ ແລະ ວັນທີ່ ໑໔ ກັນຍາ (໙) ໑໙໗໓ ແລ້ວ ກໍໄດ້ມີການປະກອບຣັຖບານ ປະສົມຊົ່ວຄາວແຫ່ງຊາດຂຶ້ນ ເມື່ອວັນທີ່ ໕ ເມສາ (໔) ໑໙໗໔ ຊຶ່ງທຸກໆກະຊວງກໍມີຣັຖມົນຕຣີ ແລະຣັຖມົນຕຣີຊ່ວຍວ່າການ, ສ່ວນກະຊວງທັມມະການ ກໍແມ່ນພະນະທ່ານມະຫາ ກູ ສຸວັນນະເມທີ ເປັນຣັຖມົນຕຣີ ແລະ ພະນະທ່ານ ສຸກັນ ວິໄລສານ ເປັນຣັຖມົນຕຣີຊ່ວຍວ່າການ.

ຣັຖມົນຕຣີທັງສອງທ່ານນີ້ ເປັນຜູ້ມີຄຸນວຸດທິທັນຫຼືເຫມາະສົມກັບຕໍາແຫນ່ງຣັຖມົນຕຣີ ແລະ ຣັຖມົນຕຣີຊ່ວຍວ່າການ ຊຶ່ງເຄີຍມີປະສົບການມາຍາວນານແລ້ວ ງານບໍຣິຫານຂອງຣັຖບານ ປະສົມຊົ່ວຄາວແຫ່ງຊາດຊຸດນີ້ ມີການແປກຕ່າງກັບຣັຖບານສໄມກ່ອນກໍດີ ອາຕອງອາໃສຄວາມເປັນເອກະສັນໃນການປະຕິບັດງານທຸກຢ່າງ ແລະພາຍໃນກະຊວງທັມມະການ ກໍມີບັນທຶກຫລັກການເປັນພື້ນຖານໃນການຈັດງານເປັນລໍາດັບຕາມຮ່ອງຮອຍກໍານົດໄວ້.

ຂ້າພະເຈົ້າເອງກໍເຂົ້າຮັບຕໍາແຫນ່ງໃຫມ່ ເມື່ອວັນທີ່ ໑ ມິນາ (໓) ໑໙໗໔ ແລະ ທ່ານຫົວໜ້າສໍານັກງານຣັຖມົນຕຣີ ແລະ ຣັຖມົນຕຣີຊ່ວຍວ່າການ ພ້ອມກັບຄະນະຄົນງານຊ່ວຍງານສໍານັກງານ ກໍໄດ້ມາຮັບຕໍາແຫນ່ງໃຫມ່ເຫມືອນກັນ, ໃນເບື້ອງຕົ້ນ ພວກຂ້າພະເຈົ້າ ກໍໄດ້ສຶກສາຄົ້ນຄວ້າວຽກການຕ່າງໆ ຮ່ວມກັບບັນດາອະທິບໍດີ ແລະ ຫົວໜ້າຫ້ອງການຕ່າງໆ ພາຍໃຕ້ການເປັນປະທານຮ່ວມຂອງຣັຖມົນຕຣີ ແລະ ຣັຖມົນຕຣີຊ່ວຍວ່າການ ໃຫ້ເປັນທີ່ເຂົ້າໃຈເຖິງພາຣະຫນ້າທີ່ອັນສໍາຄັນ ແລະຫນັກຫນ່ວງກວ້າງໃຫຍ່ຂອງກະຊວງທັມມະການ ພ້ອມກັນນັ້ນ ກໍໄດ້ພະຍາຍາມຊໍາລະສະສາງສິ່ງທີ່ຍັງຄ້າງຄາຢູ່ນັ້ນໃຫ້ສັດສົນໄປ ແລະໃນຂັ້ນຕໍ່ມາກໍໄດ້ສັງເກດເຫັນວ່າ ການດໍາເນີນງານທຸກດ້ານໄດ້ເປັນໄປດ້ວຍຄວາມຮຽບຮ້ອຍດີຫຼາຍປະການຕລອດມາ, ທັງນີ້ກໍເນື່ອງຈາກບັນດາຂ້າຣາຊການ ພາຍໃນກະຊວງ ແລະກົມກອງທັງຫລາຍໄດ້ມີຄວາມເຂົ້າໃຈຊຶ່ງກັນແລະກັນ ມີຄວາມສະມານສາມັກຄີຮ່ວມໃນຮ່ວມມືກັນປະຕິບັດຫນ້າທີ່ດ້ວຍຄວາມຈິງໃຈບໍຣິສຸດໃຈ ເພື່ອກຽດສັກສີ ຊື່ສຽງຂອງກະຊວງທັມມະການ ແລະ ເພື່ອປະໂຍດສ່ວນຮວມຂອງຊາດດ້ວຍ.

ຕາມດໍາຣັດນາຍົກຣັຖມົນຕຣີເລກທີ່ ໑໖໙/ປຊ ລົງວັນທີ່ ໑໓ ມິນາ (໓) ໑໙໖໗ ກ່ຽວກັບການຈັດຕັ້ງກະຊວງທັມມະການນັ້ນ ນອກຈາກສໍານັກງານຣັຖມົນຕຣີ ແລະ ສາຣະວັດກວດການທົ່ວໄປແລ້ວ ກໍມີສາມກົມຄື:

໑– ກົມສາສນະສຶກສາ ໒– ກົມບູຮານຄະດີ ແລະ ໓– ກົມສາສນາ

ການດໍາເນີນຕ່າງໆພາຍໃນແຂວງກໍແມ່ນພາຣະຫນ້າທີ່ຂອງຫົວຫນ້າທັມມະການປະຈໍາແຂວງ ເປັນຜູ້ຮັບຜິດຊອບ ກໍາກັບການ ຕາມຄວາມເຫມາະສົມ ພາຍໃຕ້ຄວາມອຸປະຖັມຂອງເຈົ້າແຂວງ ຊຶ່ງເປັນຜູ້ຕ່າງຫນ້າຣັຖບານໃນການປົກຄອງແຂວງ.

ໃນນາມພະນະທ່ານຣັຖມົນຕຣີ ແລະ ຣັຖມົນຕຣີ ຊ່ວຍວ່າການກະຊວງທັມມະການ ຂ້າພະເຈົ້າຂໍຖືໂອກາດນີ້ສແດງຄວາມຊົມເຊີຍ ແລະ ຍ້ອງຍໍສັນລະເສີນບັນດາທ່ານຫົວຫນ້າທັມມະການແຂວງທັງຫລາຍທີ່ໄດ້ເອົາໃຈໃສ່ປະຕິບັດຫນ້າທີ່ດ້ວຍຄວາມເຂັ້ມແຂງ ຂຍັນຫມັ່ນພຽນ ແລະໄດ້ຜົນຕາມສົມຄວນເປັນຂັ້ນໆສເມີມາ.

ເຖິງຢ່າງໃດກໍດີ ເພື່ອຄວາມເຫມາະສົມກັບຄວາມສໍາຄັນຂອງກະຊວງທັມມະການ ແລະເພື່ອຄວາມສດວກໃນການດໍາເນີນງານທຸກດ້ານໃຫ້ບັງເກີດຜົນເພີ່ມທະວີຂຶ້ນ ສົມຄວາມຄາດຫມາຍ, ໃນເມື່ອ

ບ້ານເມືອງໄດ້ຮັບຄວາມສງົບສຸກແລ້ວນີ້ ທາງຂັ້ນສູງຈະໄດ້ພິຈາຣະນາປັບປຸງຖານະທັມມະການແຂວງ ຕາມລຳດັບເປັນຂັ້ນໆໄປ ແລະ ຈະໄດດັດແປງແກໄຂຣະບຽບການຈັດຕັ້ງ ກະຊວງທັມມະການໃຫ ເຫມາະສົມກັບສພາບການ.

ດັ່ງນັ້ນ ໃນຂັ້ນຕໍ່ໄປນີ້ ຈຶ່ງຂໍໃຫ້ບັນດາທ່ານທັງຫລາຍໄດ້ພ້ອມພາກັນອອກຄວາມຄິດຄວາມເຫັນ ທີ່ຈະເປັນປະໂຍດໃນການປັບປຸງແກ້ໄຂສິ່ງທີ່ຂາດຕົກບົກພ່ອງໃຫ້ດີຂຶ້ນ ແລະ ມີປະສິດທິພາບຫມັ້ນຄົງ ແຫນ້ນຫນາຖາວອນສືບໄປ ແລະ ຫວັງຢ່າງຍິ່ງວ່າ ການປະຊຸມທັມມະການຄັ້ງນີ້ ຄົງຈະປາສົບຄວາມສຳເຣັດຜົນທຸກປະການ./-

## ມະຕິຮວມ ຂອງຄນະສົງ

### ໑/- ການປົກຄອງສົງ

໑- ຂໍໃຫ້ມີການດັດແປງ ຫລື ຮ່າງພຣະຣາຊໂອງການປົກຄອງສົງຂຶ້ນໃຫ່ມ ໃຫ້ເຫມາະສົມກັບສພາບການປັດຈຸບັນ.

໒- ໃຫ້ມີການອົບຮົມ ຫລື ສັມມະນາສົງຂຶ້ນທຸກໆປີ ໆ ລະຄັ້ງ ຕາມໂຄງການອົບຮົມສົງ ທີ່ພຣະຣາຊໂອງການຈະກຳຫນົດໄວ້ ແລະ ຂໍສເນີ ໄວ້ດັ່ງນີ້ :

໑/- ຂັ້ນປະເທດ ແມ່ນເຈົ້າຄນະແຂວງ, ຫົວຫນ້າສາສນະສຶກສາປະຈຳແຂວງ ຕ້ອງມາອົບຮົມຢູ່ສູນກາງນະຄອນວຽງຈັນ ໂດຍມີອົງສົມເດັດພຣະສັງຄະຣາຊ ຫລື ຜູ້ຕາງຫນ້າ ເປັນປະທານໃນພິທີ.

໒/- ຂັ້ນແຂວງ ແມ່ນເຈົ້າຄູນະເມືອງ, ເຈົ້າຄນະຕາແສງ ແລະ ເຈົ້າອະທິການວັດ ຫລື ພຣະພິກຂຸອົງສຳຄັນ ຕອງມາອົບຮົມຢູ່ສູນກາງແຂວງ ໂດຍມີເຈົ້າຄນະແຂວງ ເປັນປະທານ.

໓/- ໃນເມື່ອບໍ່ທັນມີພຣະຣາຊໂອງການປົກຄອງສົງໃຫ່ມອອກໃຊ້ ຂໍໃຫ້ປະຕິບັດຕາມພຣະຣາຊໂອງການປົກຄອງສົງສບັບເກົ່າມກ່ອນ ຖ້າມີວຽກການທີ່ຈະອອກເປັນຣະບຽບ ຫລື ຄຳສັ່ງອັນໃດແລ້ວ ໃຫ້ຄນະກັມມາທິການບໍຣິຫານສົງ ຮ່ວມກັບກະຊວງທັມມະການ ພິຈາຣະນາກັນເຣັດ ແລ້ວໃຫ້ກະຊວງປະກາດອອກໃຊ້.

໔/- ກອງປະຊຸມສົງເຫັນດີແຕ່ງຕັ້ງ ຄນະກັມມະການ ຄນະນຶ່ງຂຶ້ນຈຳນວນ ໖ ອົງ ຮ່ວມກັບຄນະກັມມາທິການບໍຣິຫານສົງ ໔ ອົງ ເພື່ອກວດແກ້ ຫລື ຮ່າງພຣະຣາຊໂອງການ ດັ່ງມີຣາຍຊື່ຕໍ່ລົງໄປນີ້ :

໑/- ພຣະອາຈານຄຳຕັນ ເທບບົວລີ
໒/- ພຣະອາຈານມະຫາວິຈິດ
໓/- ພຣະອາຈານມະຫາສີໂຫ
໔/- ພຣະອາຈານ ມະຫາທອງຄູນ ຕຸດຖະທັມໂມ
໕/- ພຣະອາຈານ ດຣ. ຄຳແພງ ຊຸມເພັງວົງ
໖/- ພຣະອາຈານຈະຣຸນ ວະຊິຣະຣັງສີ

ນອກຈາກນັ້ນກໍ່ມີ ອະທິບໍດີປະຈຳກະຊວງ, ບັນດາທ່ານອະທິບໍດີ, ບັນດາທ່ານຫົວຫນ້າສຳນັກງານ, ບັນດາທ່ານຄນະຄົ້ນຄວ້າ ຊ່ວຍວຽກສຳນັກງານ ເຂົ້າຮ່ວມນຳອີກ.

໕- ສະມາຄົມ ແລະອົງການຈັດຕັ້ງ ທາງພຸທສາສນາ ຄວນໃຫ້ຂຶ້ນກັບກະຊວງທັມມະການ ໂດຍຜ່ານຄວາມເຫັນຊອບຂອງຄນະສົງ.

໒- <u>ການເຜີຍແຜ່ ສີລທັມ</u>

໑- ປະຈຸບັນນີ້ບໍ່ມີພຣະເຖຣະ ອົງຊົງຄຸນວຸດທິ ອອກໄປເທສນາ
໒- ບໍ່ມີຍານພາຫະນະ ໃນການໄປມາ.
໓- ຂາດອຸປະກອນ ເຄື່ອງໃຊ້ຕ່າງ ໆ.

<u>ກອງປະຊຸມເຫັນດີດັ່ງນີ້</u> :

໑- ຄວນປັບປຸງສູນກາງອົບຣົມທັມມະກະຖຶກ ທີ່ມີຢູ່ແລ້ວ ໃຫ້ມີມາຕຖານ
໒- ຄວນປັບປຸງສູນກາງອົບຣົມວິປັສນາກັມມະຖານ ທີ່ມີຢູ່ແລວໃຫ້ເປັນມາຕຖານ.
໓- ຂໍໃຫ້ຄນະກັມມາທິການບໍຣິຫານສົງ ແລະ ພຣະເຖຣະຜູ້ໃຫຍ່ ອອກໄປເຜີຍແຜ່ສີລທັມທົ່ວທຸກແຂວງ.

໓- <u>ການສຶກສາສົງ</u>

໑- ກອງປະຊຸມສົງເຫັນດີເປັນເອກສັນວ່າ ຢາກໃຫ້ການສຶກສາສົງທັງຫມົດ ຂຶ້ນກັບກະຊວງທັມມະການ.

໔- <u>ກິຈການດ້ານບູຮານຄະດີ</u>

໑- ກອງປະຊຸມສົງ ບໍ່ເຫັນຄວນໃຫ້ນາງທໍທັມມະສະພາທາດຫລວງ ແຕ່ຂໍໃຫ້ພິຈາຣະນາສ້ອມແປງໃຫ້ດີ ແລ້ວຈັດເປັນພິພິທພັນແຫ່ງຊາດຕໍ່ໄປ.

໒- ກອງປະຊຸມສົງເຫັນດີ ຕົກລົງເປັນເອກສັນວ່າ ເພື່ອຄວາມສະດວກ ແກ່ພຣະສົງສາມະເນນ ຜູ້ເຈັບໃຂ້ໄດ້ພຍາດ ແລະຊ່ວຍຣັຖບານໂດຍທາງອ້ອມ ຈຶ່ງເຫັນສົມຄວນໃຫ້ຄນະສົງ ພະຍາຍາມຊ່ວຍເຫລືອສົມທົບໃນການສ້າງໂຮງພະຍາບານສົງຂຶ້ນ ປະຈຳແຂວງທຸກໆແຂວງ; ແຕ່ດຽວນີ້ ຢາກຂໍໃຫ້ສ້າງໂຮງພະຍາບານສົງນີ້ຂຶ້ນ ໃນນະຄອນວຽງຈັນກ່ອນ ໃນເວລາຄອຍຖ້າການສ້າງໂຮງພະຍາບານສົງຢູ່ນີ້ ຢາກຂໍໃຫ້ທາງກະຊວງສາທາຣະນະສຸກ ມອບຕຶກພະຍາບານສົງ ຊຶ່ງຄູນະສົງເຄີຍເຂົ້ານອນ ພະຍາບານຕົວຢູ່ແຕ່ກ່ອນ ໃນໂຮງພະຍາບານມະໂຫສົດນັ້ນ ໃຫ້ຄນະສົງໃຊ້ ແລະປັບປຸງສະພາບຂອງຕຶກພະຍາບານໃຫ້ເຫມາະສົມ ທຸກປະການດ້ວຍ.

ມ ະ ຕິ ຮ ວ ມ

ຣະຫວ່າງ ກະຊວງທັມມະການ ແລະທັມມະການປະຈຳແຂວງ.

-----------

ພາຍຫລັງທີ່ໄດ້ຟັງຣາຍງານຂອງກອງປະຊຸມລະອຽດແລ້ວ ກະຊວງທັມມະການ ແລະ ທັມປະຈຳແຂວງ ເຫັນວ່າ ໃນປີຜ່ານມາ ການປົກຄອງສົງໄດ້ມີຄວາມສງົບຮຽບຮ້ອຍດີ ທຳໃຫ້ພຣະສົງປະຕິ

... ...

24/VII

ບັດພຣະທັມວິນັຍໄດ້ດີພໍຄວນ. ການເຜີຍແຜ່ສີລທັມ ພຣະສົງສາມະເນນກໍໄດ້ເອົາໃຈໃສ່ເທສນາສັ່ງສອນ ອອກຕົນຍາດໂຍມ ໃຫ້ເຫຼື່ອມໃສໃນພຣະພຸທສາສນາ ຮັກສາສີລກິນທານໄດ້ດີ. ການສຶກສາສົງກໍໄດ້ຂຍາຍກວ້າງ ແລະທັງໄດ້ປັບປຸງ ດ້ານຫລັກສູດວິຊາຮຽນຂັ້ນຕົ້ນ ທີ່ເປັນມາຕຣະຖານ, ດ້ານບູຮານຄະດີ ກໍໄດ້ມີການຄົ້ນຄວ້າ ແລະປົກປັກຮັກສາບູຣະນະຕລອດມາ. ເມື່ອສັງເກດແລ້ວ ວຽກງານທັງ ໔ ດ້ານ ດັ່ງກ່າວມານີ້ ຍັງມີຄວາມຈຳເປັນເຫັນຄວນປັບປຸງຕື່ມ ດັ່ງນີ້ :

໑)- ການປົກຄອງສົງ :

໑/- ເຫັນວ່າການປົກຄອງສົງ ໃນທົ່ວພຣະຣາຊອານາຈັກລາວ ຍັງບໍ່ທັນສົມບູນ ບໍ່ເຫມາະສົມກັບສພາບການຕົວຈິງ ຈຶ່ງສເນີໃຫ້ປັບປຸງແກ້ໄຂພຣະຣາຊໂອງການປົກຄອງສົງຂຶ້ນໃຫມ່ໃຫ້ເຫມາະສົມ.

໒/- ເຫັນວ່າມີການແຕກຕ່າງກັນ ທາງດ້ານການປະຕິບັດ ພຣະທັມວິນັຍ, ສັງຄະກັມ ແລະພິທີກັມຕ່າງໆ, ການສູດ, ການເທສນາ.

໓/- ເຫັນວ່າສມາຄົມສາສນາຕ່າງໆ ຍັງບໍ່ຂຶ້ນກັບອາດຍາສິດສົງ ແລະກະຊວງທັມມະການ ແລະກະຊວງກໍບໍ່ມີສ່ວນຮັບຜິດຊອບ. ເປັນເຫດໃຫ້ຜູ້ມີອິດທິພົນ ສວຍໃຊ້ສມາຄົມ ແລະ ສາສນາໄປສ້າງອິດທິພົນສ່ວນຕົວ. ນອກນີ້ ກໍເປັນສາຍເຫົ້າໃຫ້ສມາຄົມສາສນາອື່ນສວຍໂອກາດເຂົ້າແຊກແຊງກິຈການ ທາງສາສນາ ແລະບ້ານເມືອງ;

໔/- ເຫັນສົມຄວນຈັດໃຫ້ມີການສັມມະນາອົບຮົມ ພຣະອາດຍາສິດສົງ ກ່ຽວກັບການປົກຄອງ ໃຫ້ເຂົ້າໃຈຣະບຽບກົດຫມາຍຂອງບ້ານເມືອງ, ເຂົ້າໃຈຣະບຽບການປົກຄອງສົງ ແລະ ດ້ານການດຳເນີນວຽກບໍຣິຫານທົ່ວໄປ.

໒)- ການເຜີຍແຜ່ສາສນາ :

໑/- ການເຜີຍແຜ່ສາສນາ ຜ່ານມາຍັງສູນຢູ່ແຕ່ໃນຕົວເມືອງ, ບໍ່ລົງເຖິງຊົນບົດ, ມີແຕ່ສາສນາອື່ນໆ ໄປເຜີຍແຜ່ສາສນາຂອງເຂົາ. ດ້ວຍເຫດນີ້ ສີລທັມທາງສາສນາ ຈຶ່ງບໍ່ແຜ່ພາຍໄປທົ່ວຊົນບົດ ເປັນເຫດໃຫ້ຄົນໃນຊາດ ເຫີນຫ່າງຈາກສີລທັມ ທາງສາສນາຂອງຕົນ. ປະຊາຊົນຈຶ່ງມີການເຊື່ອງົມງວາຍຢູ່ຕາມທ້ອງຖິ່ນທີ່ຫ່າງໄກ.

໒/- ຣະບຽບການຈັດຕັ້ງໃນການເຜີຍແຜ່ສີລທັມ ຍັງບໍ່ທັນເປັນຣະບົບແລະມາຕຣະຖານ ເນື່ອໃນການເຜີຍແຜ່ຍັງບໍ່ຖືກກັບສພາບການຕົວຈິງຂອງສັງຄົມໃນປັດຈຸບັນ. ທີ່ຈິງ ຄວນຈະເລັງໃສ່ເທສນາ ໃຫ້ປະຊາຊົນດຸຫມັ່ນຕໍ່ການເພີ່ມພູນຜລິດຜົນ ຮັກແພງສາມັກຄີ ຊ່ວຍເຫລືອຊຶ່ງກັນ ແລະກັນ.

໓/- ການສັງຄົມສົງເຄາະ ກັບການເຜີຍແຜ່ ຄວນຈະໄປຄຽງຄູ່ກັນ ຈຶ່ງຈະສົ່ງເສີມໃຫ້ປະຊາຊົນມີສັດທາເຫລື່ອມໃສຫລວງຫລາຍຕື່ມອີກ.

໔/- ການເຜີຍແຜ່ເທສນາ ຄວນເລັ່ງໃສ່ເຜົ່າຊົນຕ່າງໆ ເພື່ອໃຫ້ເຂົ້າບວດຮຽນ ແລ້ວສົ່ງໄປເທສນາ ໃນຫມູ່ເຜົ່າຊົນຂອງເຂົາເຈົ້າ.

໓)- ການສຶກສາສົງ :

໑/- ຄວນສົ່ງເສີມ ແລະຂຍາຍໂຮງຮຽນປຖົມ ໂຮງຮຽນມັທຍົມຂັ້ນຕົ້ນ; ເພາະເຫັນວ່າ ພຣະພິກຂຸສາມະເນນມີຫລາຍ, ແຕ່ໂຮງຮຽນມີຫນ້ອຍ ເປັນຕົ້ນ ແມ່ນມີຢູ່ແຕ່ໃນຕົວເມືອງໃຫຍ່ໆ ອັນເປັນເຫດໃຫ້ພຣະສົງຫລັ່ງໄຫລ ເຂົ້າມາຢູ່ແຕ່ໃນຕົວເມືອງ ຫນີຈາກຊົນບົດ.

໒/- ເຫັນວ່າຣະບົບການສຶກສາສົງຢູ່ພູກວັນນີ້ ຍັງບໍ່ທັນຮວມສູນ ເຫັນຄວນໃຫ້ມາຂຶ້ນກັບກະຊວງທັມມະການບອນດຽວ ແຕ່ຊັ້ນຕ່ຳ ເຖິງຊັ້ນສູງ.

໓/- ຊາດປຶ້ມຮຽນທີ່ເປັນພາສາລາວ ເພາະປຶ້ມຮຽນ ຕັ້ງແຕ່ຊັ້ນປຖົມເຖິງຊັ້ນມັທຍົມ ສ່ວນຫລາຍແມ່ນຊຈາກຕ່າງປະເທດ ທີ່ເປັນພາສາໄທມາສຶກສາ ແລະສິດສອນກັນ. ພາໃຫ້ເງິນຕຣາຫລັ່ງໄຫລໄປສູ່ຕ່າງປະເທດ ແລະທັງເປັນການນຳເອົາວັທນະທັມດ້ານພາສາ ແລະອັກສອນສາດຊາດອື່ນມາຂຍາຍຢູ່ບ້ານເຮົາ.

໔/- ຄວນຕັ້ງໂຮງຮຽນປາລີມັທຍົມຕອນປາຍຂຶ້ນຕື່ມ ແລະເຫັນດີໃຫ້ຕັ້ງສູນອົບຮົມຄຣູຂຶ້ນເປັນການຖາວອນ, ເພື່ອໃຫ້ນັກຮຽນໄດ້ມີບ່ອນຮຽນພຽງພໍ ແລະສ້າງນາຍຄຣູ ທີ່ມີສມັຖພາບ ມີຄວາມຊຳນິຊຳນານແທ້ ໃນດ້ານວິຊາຄຣູ.

໕/- ເຫັນຄວນປັບປຸງແປງຫລັກສູດການຮຽນ ໃຫ້ມີວິຊາ ທັງທາງໂລກ ແລະທາງທັມ ຄຽງຄູ່ກັນໃຫ້ດີກວ່າເກົ່າ ທັງນີ້ ເພື່ອໃຫ້ນັກສຶກສາທາງສາສນາ ມີວິທຍາຖານະ ຮັບໃຊ້ໄດ້ ທັງທາງໂລກແລະທາງທັມ.

## ໔)- ດ້ານບູຮານຄະດີ

໑/- ຄວນເອົາໃຈໃສ່ສິ່ງເສີມວັດຖຸບູຮານ, ສິລປະ, ວັມນະຄະດີ ແລະວັທນະທັມຂອງຊາດ, ບູຮນະວັດວາອາຮາມ, ພຣະເຈດີ, ກຸຕິວິຫານ, ບູຮານສຖານຕ່າງໆ.

໒/- ຄວນຄວບຄຸມການສ້າງວັດວາອາຮາມ ຜ່ານມາ ມັກມີການສ້າງວັດແບບກະແຈກກະຈາຍບໍ່ຖືກຕ້ອງກັບພຣະຣາຊໂອງການ ການປົກຄອງສົງ ຫລືວ່າສ້າງຂຶ້ນຫລາຍອັ່ງອໍ ແຕ່ພັດເບິ່ງເບົາວັດວາອາຮາມທີ່ມີແລ້ວ ບໍ່ເອົາໃຈໃສ່ປັບປຸງປົວແປງ.

໓/- ເຫັນຄວນສຳຣວດ ທີ່ທໍຣະນີສົງ ໃຫ້ທົ່ວເຖິງ ແລະນຳໄປຂຶ້ນທະບຽນ ເພື່ອຫລີກເວັ້ນຈາກການສໍ້ໂກງ.

໔/- ເອົາໃຈໃສ່ສຳຣວດຮັກສາວັດຖຸບູຮານ ຫລີກເວັ້ນບໍ່ໃຫ້ຕົກເຮັ່ຽເສັຽຫາຍຈາກໂຈນລັກປຸ້ນ.

໕/- ເຫັນຄວນຕັ້ງຫໍພິພິທພັນຂຶ້ນ ໓ ພາກ ຄື : ຫລວງພຣະບາງ, ວຽງຈັນ, ປາກເຊ. ຖ້າພໍໄດ້ກໍຄວນຈັດຕັ້ງພິພິທພັນສ່ວນພູມີພາກ ຕາມແຂວງຕ່າງໆຂຶ້ນ.

໖/- ໃນໂອກາດບຸນສລອງທາດຫລວງແຕ່ລະປີ ກິຈການກ່ຽວກັບພຣະສົງ ແລະສາສນະພິທີ ຕລອດເຖິງເງິນທີ່ໄດ້ຈາກການຂາຍດອກໄມ້ ແລະເງິນທີ່ປະຊາຊົນບູຊາອົງພຣະທາດໃນງານບຸນ ແລະບູຊາ ເປັນປະຈຳວັນນັ້ນ ຄວນໃຫ້ເປັນຣາຍໄດ້ ເພື່ອບຳຣຸງພຣະທາດຫລວງໂດຍສະເພາະໂດຍແມ່ນຄນະສົງແລະກະຊວງທັມມະການ ເປັນຜູ້ກຳກັບຮັບຜິດຊອບຮວມກັນ.

## ໕)- ດ້ານກະຊວງ ແລະ ທັມມະການແຂວງ

໑/- ເຫັນວ່າຖານະຂອງທັມມະການປະຈຳແຂວງ ຍັງບໍ່ທັນເທົ່າທຽມກັບພແນກການອື່ນໆ ພາໃຫ້ການດຳເນີນວຽກການ ແບບເປັນເຈົ້າຕົນເອງບໍ່ໄດ້.

໒/- ຂ້າຣາຊການຝ່າຍທັມມະການປະຈຳແຂວງ ແຕ່ລະແຂວງ ມີໜ້ອຍທີ່ສຸດ ແລະບາງແຂວງບໍ່ທັນມີ, ເຫັນເພີ່ມຂ້າຣາຊການຕື່ມ ຈຶ່ງສົມອວຽກງານ ໄດ້ຕາມຄວາມຕ້ອງການ.

໓/- ເຫັນຄວນບັນຈຸອາຣາຊການຝ່າຍທັມມະການ ໄປປະຈຳສຳນັກງານຂອງສົມເດັດພຣະສັງຄະຣາຊ, ທີ່ປຶກສາພຣະພຸທສາສນາ, ກົມມາທິການບໍຣິຫານສົງ ແລະສຳນັກເຈົ້າຄນະແຂວງທຸກໆແຂວງ. ເພື່ອເຮັດວຽກປະສານງານຣະຫວ່າງກະຊວງກັບອົງການປົກຄອງສົງ ແລະ ພແນກການຕ່າງໆ.

໔/- ຄວນຈັດຕັ້ງກົມໃຫມ່ຂຶ້ນອີກ ໑ ກົມ ເພື່ອທຳຫນ້າທີ່ຄົ້ນຄວ້າຫລັກສູດ ແລະອື່ນໆ.

໕/- ເຫັນຄວນບັນຈຸອາຣາຊການທັມມະການ ຝ່າຍບູຮານຄະດີ ໄປປະຈຳທຸກແຂວງ ເພື່ອຮັບຜິດຊອບ ວຽກບູຮານຄະດີ.

໖/- ສເນີໃຫ້ຣັຖບານ ນຳເອົາໂຄງການງເມືອງ ໑໘ ຂໍ້ ແລະ ຂໍ້ກຳຫນົດຊົ່ວຄາວ ວ່າດ້ວຍສິດເສຣີພາບປະຊາທິປະໄຕ ອອກມາປະຕິບັດໃນເວລາອັນໄວເພື່ອເປັນແນວທາງປະຕິບັດວຽກການໃນຂັ້ນຕໍ່ໄປ./-

ຣາຍງານ ການປະຕິບັດງານ

ຂອງກະຊວງທັມມະການ ໃນນຶ່ງປີທີ່ຜ່ານມາ

ໂດຍພຍາສຸກົມ ວິໄລສາຣ ຣັຖມົນຕຣີຊ່ວຍວ່າການກະຊວງທັມມະການ

---

- ນ້ອມໄຫວ້ພຣະຣັຕນະໄຕຣ
- ນ້ອມນະມັສການ ອົງສົມເດັດພຣະສັງຄະຣາຊ, ພຣະເຖຣານຸເຖຣະທີ່ສັກກາຣະ.
- ບຸ້ມດຽທ່ານອະທິບໍດີ, ຫົວຫນ້າສຳນັກງານ, ຫົວຫນ້າຫ້ອງການ ແລະທານຜູ້ມີກຽດ ທີ່ນັບຖືແລະຮັກແພງທັງຫລາຍ.

ຫລັງຈາກທີ່ທາງກະຊວງທັມມະການ ໄດ້ຈັດໃຫ້ມີກອງປະຊຸມຫລວງຂຶ້ນຣະຫວ່າງຝ່າຍສົງ ແລະ ຝ່າຍຄະຣືຫັດ ເພື່ອພ້ອມກັນຄົ້ນຄ້ວາປັບປຸງວຽກງານກ່ຽວກັບດ້ານພຣະພຸທສາສນາ ໃຫ້ມີຄວາມກ້າວຫນ້າແລະຈະເຣີນງອກງາມຕໍ່ໄປ ຕາມໂຄງການຂອງຣັຖບານປະສົມຊົ່ວຄາວແຫ່ງຊາດແລ້ວ ນັ້ນກໍຈະເປັນອັນປິດປະຊຸມດັ່ງກ່າວລົງ.

ດັ່ງພຣະຜູ້ເປັນເຈົ້າທັງຫລາຍໄດ້ຊາບມາແລ້ວ, ປະເທດເຮົາໄດ້ຖືກໄພສົງຄາມມາເປັນເວລາຍືດເຍື້ອຍາວນານ ອັນໄດ້ເຮັດໃຫ້ຊາດແລະສາສນາມີຄວາມເດືອດຮ້ອນ ແລະຊຸດໂຊມລົງ ເຖິງວ່າສພາບການຈະສັບສົນອົລເວງຍ້ອນເສິກສົງຄາມກໍດີ ແຕ່ພຣະສົງສາມະເນນກໍຍັງໄດ້ຍຶດຫມັ້ນຢູ່ໃນພຣະທັມມະວິນັຍ, ຕັ້ງໃຈຮ່ຳຮຽນແລະເທສນາສັ່ງສອນປະຊາກອນຢ່າງບໍ່ລົດລະ ແລະໄດ້ພ້ອມກັນຄ້ຳຊູພຣະພຸທສາສນາ ອັນເປັນສາສນາປະຈຳຊາດຢູ່ຕລອດມາ.

ດ້ວຍເດຊະປາຣະມີຂອງພຣະຣັຕນະໄຕຣ, ປະເທດຊາດຂອງພວກເຮົາ ໄດ້ຫັນປ່ຽນຈາກສົງຄາມມາສູ່ສັນຕິພາບ, ສ້າງຄວາມຖືກຕ້ອງປອງດອງຊາດ ໂດຍມີສັນຍາ ແລະ ອະນຸສັນຍາ ທີ່ທັງສອງຝ່າຍໄດ້ເຊັນກັນເປັນສິ່ງຄ້ຳປະກັນ ແລະ ຣັຖບານປະສົມຊົ່ວຄາວແຫ່ງຊາດກໍໄດ້ຖືກສ້າງຕັ້ງຂຶ້ນ, ຂ້າພະພຸທເຈົ້າທັງສອງທີ່ເປັນຣັຖມົນຕຣີແລະຣັຖມົນຕຣີຊ່ວຍວ່າການ ກໍໄດ້ສາມັກຄີພ້ອມພຽງກັນປະຕິບັດວຽກງານພາຍໃນກະຊວງຕາມໂຄງການຂອງຣັຖບານປະສົມຊົ່ວຄາວແຫ່ງຊາດ. ການຮັບໜ້າທີ່ແລະປະຕິບັດວຽກງານຂອງຂ້າພະພຸທເຈົ້າທັງສອງ ໄດ້ດຳເນີນມາພຽງ ໖ ເດືອນກວ່າ ຊຶ່ງເປັນເວລາ ອັນສັ້ນ ແຕ່ກໍພາກພູມໃຈເປັນທີ່ສຸດ ທີ່ໄດ້ມີໂອກາດອຸທິດສະຕິປັນຍາ ມາຮັບໃຊ້ພຣະພຸທສາສນາ ແລະ ພຣະພຸມທ່ານທັງຫລາຍໃຫ້ໄດ້ພົ້ນຕໍ່ໄປ ຊຶ່ງຖືວ່າເປັນບຸນຍະລາບອັນຍິ່ງໃຫຍ່ຂອງພວກຂ້າພະພຸທເຈົ້າ.

ໃນໂອກາດນີ້, ຂ້າພະພຸທເຈົ້າ ຂໍນຳເອົາຣາຍງານກ່ຽວກັບພາຣະກິດທີ່ຂ້າພະພຸທເຈົ້າທັງສອງ ແລະ ບັນດາທ່ານອະທິບໍດີທັງຫລາຍ ພ້ອມທັງເຈົ້າໜ້າທີ່ກົມກອງຕ່າງໆໃນກະຊວງ ຕລອດທັມມະການປະຈຳແຂວງ ຊຶ່ງໄດ້ປະຕິບັດມານັ້ນ ມາຣາຍງານໃຫ້ກອງປະຊຸມຫລວງໄດ້ຊາບດັ່ງຕໍ່ລົງໄປນີ້ ຊຶ່ງເມື່ອເບິ່ງທົ່ວໄປແລ້ວ ກໍເຫັນວ່າການປະຕິບັດງານຂອງທຸກຄົນເປັນໜ້າເພິ່ງພໍໃຈ ແລະເປັນໜ້າສັນລະເສີນທີ່ສຸດ.

### ໑.- <u>ວຽກງານການປົກຄອງສົງ</u> :

ວຽກງານການປົກຄອງສົງ ເຖິງວ່າເປັນໜ້າທີ່ ແລະ ສິດທິຂອງສົງໂດຍສະເພາະກໍຕາມ ແຕ່ທາງກະຊວງທັມມະການ ກໍເຫັນວ່າມີຄວາມສຳຄັນ ເພາະເປັນວົງການປົກຄອງທາງດ້ານພຸທຈັກ ຄຽງຄູ່ກັບທາງອານາຈັກ ທາງກະຊວງຈຶ່ງມີພາຣະໜ້າທີ່ໂດຍກົງ ຕ້ອງຕອບສນອງໃນການປະຕິບັດ ກ່ຽວກັບຣະບຽບກົດໝາຍຂອງບ້ານເມືອງ ຊຶ່ງພຣະສົງສາມະເນນ ບໍ່ສາມາດປະຕິບັດດ້ວຍຕົນເອງໄດ້.

ເພື່ອສົ່ງເສີມໃຫ້ສົງປົກຄອງສົງໂດຍພຣະສົງເອງ ເພື່ອຄວາມເປັນຣະບຽບຮຽບຮ້ອຍດີ ຄຽງຄູ່ກັບທາງອານາຈັກນັ້ນ ກະຊວງທັມມະການ ໄດ້ອີງໃສ່ພຣະຣາຊໂອງການເລກທີ່ ໑໖໐ ລົງວັນທີ່ ໒໕ ພຶສພາ ໑໙໕໙, ໄດ້ສນອງແຕ່ງຕັ້ງພຣະອາຈາຍາສິດສົງຂຶ້ນ ແຕ່ຂັ້ນສູງລົງເຖິງເຈົ້າອະທິການວັດ ຮວມທັງໝົດມີພຣະອາຈາຍາສິດສົງຈຳນວນ ໒.໕໖໘ ອົງ ໂດຍມີອົງສົມເດັດພຣະສັງຄະຣາຊ ຊົງເປັນປະມຸກ ແລະທາງກະຊວງກໍໄດ້ຖວາຍນິຈພັດທຸກໆເດືອນ ລວມແລ້ວໃນປີທີ່ຜ່ານມາ ໄດ້ຖວາຍນິຈພັດ ຕົກເປັນເງິນ ໕.໕໘໐.໐໐໐ ກີບ. ນັບຕັ້ງແຕ່ງົບປະມານສົກ ໑໙໗໔-໗໕ ເປັນຕົ້ນມາ ທາງກະຊວງກໍໄດ້ນິຈພັດຖວາຍຕາມດຳຣັດໃໝ່ ຂອງສເດັດນາຍົກຣັຖມົນຕຣີ ເລກທີ່ ໓໘໖/ນຍ ລົງວັນທີ່ ໑໙/໖/໗໔ ເປັນການເພີ່ມນິຈພັດຂຶ້ນ ຕຳແໜ່ງລະ ໑໐໐% .

ໄດ້ຈັດການປະຊຸມຄນະກັມມາທິການບໍຣິຫານສົງຂຶ້ນ ປະຈຳວັນພຸດ ເດືອນລະ ໒ ເທື່ອ ນັບແຕ່ວັນທີ່ ໒໖/໖/໗໔ ເປັນຕົ້ນມາ ໂດຍມີບັນດາອະທິບໍດີ,ຫົວໜ້າສຳນັກງານ ເຂົ້າຮ່ວມນຳທຸກຄັ້ງ ເພື່ອປຶກສາຫາລືແລະຊອກທາງປັບປຸງວຽກງານທາງດ້ານພຣະພຸທສາສນາ ກັບກະຊວງທັມມະການໃຫ້ສອດຄ່ອງກົມກຽວກັນ.

ນອກນີ້ທາງກະຊວງຍັງໄດ້ຮັບຄວາມຮ່ວມມືຈາກ ກະຊວງສາທາຣະນະສຸກ ໃນການຈ່າຍຄ່າຢາປິ່ນປົວພຍາດ ແກ່ບັນດາສົງທີ່ອາພາດ ໄດ້ຊອກປັດໄຈອະນຸໂມທນາມາກຳການຊາປະນະກິດສົບຂອງສົງຜູ້ມໍຣະນະພາບ, ໄດ້ຈັດສົ່ງວົບປະມານອຸປະກອນການພິມແລະການຂຽນ ຖວາຍພຣະອາດຍາສຶກສົງ ແລະໄດ້ກຳກັບການໄປປະກອບພາຣະກິດຕ່າງໆ ທາງດ້ານພຣະພຸທສາສນາຂອງພຣະສົງ ເຊັ່ນອົງສົມເດດພຣະສັງຄະຣາຊ, ທີ່ປຶກສາພຣະພຸທສາສນາ, ຄນະກັມມາທິການບໍຣິຫານສົງ ຕລອດການບວດ, ການສຶກ, ການໄປສຶກສາຢູ່ຕ່າງປະເທດ, ນອກນີ້ກໍຍັງໄດ້ເອົາໃຈໃສ່ວຽກສາສນະພິທີ ການທຳບຸນເປັນທາງຣາຊການ ແລະດ້ານສະຖິຕິ ຈຳນວນວັດ, ພຣະສົງ, ການບວດ, ການສຶກ, ການມໍຣະນະພາບ, ຄຳພີດີກາ, ພຣະພຸທຮູບ ແລະ ອື່ນໆ.

## ໔.- ດ້ານການເຜີຍແຜ່ພຣະພຸທສາສນາ :

ການເຜີຍແຜ່ພຣະພຸທສາສນາ ແມ່ນການເຜີຍແຜ່ສິລທັມຄຳສັ່ງສອນຂອງອົງພຣະສັມມາສັມພຸທເຈົ້າ ໃຫ້ເຂົ້າສູ່ຈິດໃຈຂອງປະຊາຊົນ ແລະ ຮູ້ວ່າສິລທັມຄຳສັ່ງສອນຂອງພຣະພຸທເຈົ້ານັ້ນ ມີເຫດມີຜົນແນວໃດ, ເມື່ອນຳໄປປະຕິບັດແລ້ວ ຜູ້ປະຕິບັດຈະໄດ້ຮັບຜົນດີ ຜົນຊົ່ວແນວໃດ? ດ້ວຍເຫດດັ່ງກ່າວມານີ້ ໜ້າທີ່ໂດຍສະເພາະຂອງພຣະສົງນັ້ນ ແມ່ນນຳເອົາສິລທັມຄຳສອນຂອງພຣະພຸທເຈົ້າ ໄປເທສນາສັ່ງສອນໃຫ້ແກ່ເຫລົ່າພຸທບໍຣິສັດເຂົ້າໃຈແລະເຫລື້ອມໃສ ແລ້ວນຳໄປປະຕິບັດ ໃຫ້ເປັນຄົນດີມີສິລທັມ ເວັ້ນຈາກການປະພຶດສະຣາຍກັນທາງກາຍວາຈາໃຈ ແລ້ວໃຫ້ຢູ່ຮ່ວມກັນໂດຍສັນຕິ, ປາສຈາກຄວາມໂລບ, ໂກດ, ຫລົງ ພ້ອມກັນສາມັກຄີ ສ້າງບ້ານແປງເມືອງ ໃຫ້ມີຄວາມສີວິລັຍ ຮຸ່ງເຮືອງເຫລືອງເຫລື້ອມ ແລະມີຄວາມສງົບສຸກໄປຊົ່ວກາລະນານ.

ກະຊວງທັມມະການຖືສເມີວ່າ ການເຜີຍແຜ່ສິລທັມນັ້ນ ກໍເປັນວຽກສຳຄັນຂອງກະຊວງ, ຕ້ອງໄດ້ອຸປະຖັມບຳຣຸງ ສົ່ງເສີມພຣະສົງສາມະເນນໃຫ້ໄດ້ຮັບຄວາມສດວກ ແລະມີເງື່ອນໄຂອອກໄປເທສນາເຜີຍແຜ່ສິລທັມຢ່າງມີແຜນ ແລະ ໃຫ້ໄດ້ຮັບຜົນ.

ດ້ວຍເຫດນີ້, ທາງກະຊວງທັມມະການຈຶ່ງໄດ້ມີໂຄງການ ແລະອອກດຳຣັດແຕ່ງຕັ້ງກັມມະການເຜີຍແຜ່ສິລທັມຂຶ້ນເປັນ ໔ ຂັ້ນ ຄື: ຂັ້ນຣະດັບຊາດ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ. ສະເພາະຢູ່ແຂວງວຽງຈັນ ຄນະເຜີຍແຜ່ສິລທັມໄດ້ຈັດຕັ້ງໂຮງຮຽນອົບຮົມຂຶ້ນຊື່ວ່າ " ສພາທັມມະກະຖຶກ " ໜຶ່ງແຫ່ງເພື່ອທຳການຝຶກຫັດ ພຣະພິກຂຸສາມະເນນ ໃນດ້ານພິທີກັມຕ່າງໆ ການເທດ, ການສູດ ແລະ ສັງຄະກັມ. ໃນໂອກາດຈຳພັນສາແຕ່ລະປີ ສພາທັມມະກະຖຶກ ກໍໄດ້ວາງແຜນການອອກໄປເຜີຍແຜ່ສິລທັມຢູ່ຫລາຍບ່ອນຕາມຊົນນະບົດ ໂດຍທາງກະຊວງກໍໄດ້ສົ່ງຂ້າຣາຊການຊັ້ນຜູ້ໃຫຍ່ຕິດຕາມໄປທຸກໆຄັ້ງ, ຊຶ່ງເປັນການສົ່ງເສີມພຸທບໍຣິສັດ ໃຫ້ມີຈິດສັດທາເຫລື້ອມໃສເປັນສ່ວນຫລາຍ, ໄປພ້ອມໆກັນນັ້ນ ທາງອົງການສົ່ງເສີມພຣະພຸທສາສນາ (ອ.ສ.ພ.) ກໍໄດ້ໄຂໂຮງຮຽນຂຶ້ນຫລາຍສຳ

ນັກ ທັງຢູ່ນະຄອນຫລວງວຽງຈັນ ແລະຕາມແຂວງຕ່າງໆ ເພື່ອອົບຮົມພຸທຍຸວະຊົນໃຫ້ຮູ້ຈັກສີລທັມ ວັທນະທັມ, ຮູ້ຈັກຂນົບທັມນຽມປະເພນີອັນດີງາມຂອງລາວ ໃຫ້ເປັນພົລເມືອງດີຂອງຊາດຕໍ່ໄປ.

## ໓.- ດ້ານການສຶກສາສົງ :

ການສຶກສາທາງພຣະພຸທສາສນາ ເປັນວຽກສຳຄັນ ແລະມີຄຸນປະໂຍດຍິ່ງ. ໃນອະດີດ ວັດວາສາສນາ ເປັນບໍ່ເກີດທາງດ້ານວັທນະທັມ ສິລປະກັມ ແລະ ຫັຖກັມ ເປັນບ່ອນເຕົ້າໂຮມການອົບຮົມສີລທັມອາດເວົ້າໄດ້ວ່າບັນດາວິຊາຄວາມຮູ້ທັງຫລາຍ ແມ່ນອອກມາຈາກວັດວາອາຣາມ, ຊຶ່ງເຫັນໄດ້ວ່າ ນັກປົກຄອງແຕ່ຂັ້ນບ້ານເຖິງຂັ້ນສູງ ມີຄວາມສລາດຄ່ອງແຄ້ວ ຫລັກແຫລມສາມາດຮັກສາປິຕຸພູມຂອງເຮົາໄວ້ເປັນມໍຣະດົກຕົກທອດມາໃຫ້ເຮົາເຖິງເທົ່າທຸກວັນນີ້. ນັກປາດຣາຊບັນດິດຕ່າງໆ ກໍລ້ວນແຕ່ໄດ້ສຶກສາອອກມາຈາກວັດວາອາຣາມທັງນັ້ນ, ປະຊາກອນຂອງລາວ ໗໕% ທີ່ອ່ານໄດ້ຂຽນເປັນ ລ້ວນແຕ່ຮຽນອອກມາຈາກວັດທັງນັ້ນ. ເຄົ້າມູນຂອງພາສາລາວແມ່ນມາຈາກປາລີສັນສກຣິດທີ່ສຶກສາອອກມາທາງດ້ານພຣະພຸທສາສນາ. ດັ່ງນັ້ນຈຶ່ງເຫັນວ່າ ມາຮອດປັດຈຸບັນນີ້ ການສຶກສາທາງພຣະພຸທສາສນາ ກໍຍັງມີຄວາມສຳຄັນຢູ່ເຊັ່ນເດີມ ຄວນຍົກຣະດັບຄວາມຮູ້ທາງດ້ານນີ້ໃຫ້ສູງຂຶ້ນກວ່າເກົ່າ.

ດ້ວຍເຫັນມີຄວາມສຳຄັນດັ່ງກ່າວນີ້ ກະຊວງທັມມະການຈຶ່ງໄດ້ເອົາໃຈໃສ່ປັບປຸງຣະບົບການສຶກສາ ຂັ້ນປະຖົມ ແລະຂັ້ນມັທຍົມ ໃນທົ່ວພຣະຣາຊອານາຈັກລາວ ໂດຍໄດ້ຂຍາຍໂຮງຮຽນອອກເພີ່ມປັບປຸງວິຊາຫລັກສູດຕ່າງໆ ແລະ ຈັດພິມປຶ້ມຫລັກສູດການຮຽນເທົ່າທີ່ມີຄວາມສາມາດ ເພື່ອແກ້ໄຂໃຫ້ໂຮງຮຽນ ປະຖົມແຕ່ ປ. ໑. ເຖິງ ປ. ໖ ມີ ໑໔໖ ແຫ່ງ, ມີນັກຮຽນເຖິງ ໓.໑໙໐ ອົງ. ໂຮງຮຽນມັທະຍົມ ໑໔ ແຫ່ງ, ມີນັກຮຽນ ໑.໐໗໖ ອົງ ລວມນັກຮຽນທັງໝົດ ໔.໘໖໖ ອົງ ມີຄຣູມັທະຍົມ ໖໘ ອົງ ຄຣູປະຖົມ ໘໗໘ ອົງ.

ທາງດ້ານວິຊາການ ກໍໄດ້ປັບປຸງໃຫ້ມີວິຊາທາງໂລກຕາມຫລັກສູດຂອງໂຮງຮຽນໂລກ ມາເພີ່ມເຕີມຄຽງຄູ່ກັບວິຊາທາງດ້ານພຣະພຸທສາສນາ, ໄດ້ຮຽບຮຽງ ແລະ ພິມປຶ້ມຄູ່ມືການສອນຂຶ້ນຄື: ປຶ້ມທັມມະ, ປຶ້ມປະວັດສາດ ປ.໔.໕.໖, ປຶ້ມພູມີສາດ, ປຶ້ມຣັບນິຈະພັດພຣະຄຣູສອນ.

## ໔.- ວຽກງານດ້ານບູຮານຄະດີ :

ວຽກບູຮານຄະດີນີ້ມີພາຣະໜ້າທີ່ ກ່ຽວກັບການຄູ້ມຄອງ ຮັກສາ ບູຣະນະ ແລະ ສົ່ງເສີມດ້ານບູຮານວັດຖຸ, ບູຮານສະຖານ ທີ່ສັກສິດຂອງຊາດ. ເປັນຕົ້ນວັດວາອາຣາມ, ສາສນະສົມບັດ, ຫໍຣະນີສົງ, ພຣະທາດເຈດີ, ຫໍສມຸດ, ຂນົບທັມນຽມປະເພນີ, ສິລປະວັນນະຄະດີ ແລະ ວັທນະທັມຂອງຊາດ.

ກິຈການໃນປີຜ່ານມາ ໄດ້ອະນຸຍາດໃຫ້ສ້າງວັດຂຶ້ນໃໝ່ ໖ ແຫ່ງ ສ້າງແລະຂອດພັທສີມາ ໔໔ ຫລັງ, ກຸຕິ ໔ ຫລັງ, ຫໍແຈກ ໖ ຫລັງ, ສ້າງທາດໃໝ່ ໔ ລູກ, ຫໍໄຕ ໑ ຫລັງ. ດ້ານການສ້ອມແປງບູຮານສະຖານນັ້ນ ໄດ້ສ້ອມແປງຫໍໄຫວ້ພຣະທາດຫລວງທັງ ໔ ດ້ານ ແລະ ຫໍກວມພຣະທາດທັມມະຫາຍໂສກ ໑ ຫໍ, ຢຶດຢາຫໍພຣະແກ້ວ ແລະ ອື່ນໆ ໄດ້ຄົ້ນຄວ້າ ແລະ ສຳຣວດວັດຖຸບູຮານແລະບູຮານສະຖານ ຄື : ໄປສຳຣວດຖ້ຳວັງຊ້າງ, ດານພຣະ, ດານຫນັງສື, ເມືອງໂພນໂຮງ, ສຳຣວດພຣະທາດຫີນພະຄຣູໂພນສເມັກ ທີ່ບ້ານດອນ ສີທັນດອນ, ປັກຫລັກຫມາຍທໍຣະນີສົງ ແລະ ຂຶ້ນທະບຽນຕາດິນວັດຫລາຍວັດ. ດ້ານຫໍພິພິທພັນ ແລະ ຫໍສມຸດ ນອກຈາກເອົາໃຈໃສ່ກຳກັບ ແລະ ຈັດສັນວາງວັດຖຸສິ່ງຂອງໃຫ້ເປັນຣະບຽບແລ້ວ ທາງກະຊວງກໍໄດ້ວາງໂຄງການຈະສ້າງຫໍສມຸດ ແລະຫໍພິພິທພັນແຫ່ງຊາດ ໃຫ້ເຂົ້າມາຕະຖານຕື່ມອີກ.

### ໔.- <u>ກິຈການທັມມະການປະຈຳແຂວງ</u> :

ທັມມະການປະຈຳແຂວງເປັນພແນກການ ຕາງຫນ້າຂອງກະຊວງປະຈຳແຕ່ລະແຂວງ ຈຶ່ງມີຄວາມສຳຄັນເປັນລຳດັບ ທັມມະການປະຈຳແຂວງມີຫນ້າທີ່ ນຳເອົາແນວທາງນະໂຍບາຍຂອງກະຊວງໄປປະຕິບັດ ອຸປຖັມວັດວາພຣະສາສນາ, ດ້ານປົກຄອງສົງ, ການເຜີຍແຜ່ສິລທັມ, ການສຶກສາສົງ, ບູຮານຄະດີ. ນອກນັ້ນກໍຍັງມີພາຣະຫນ້າທີ່ຕິດຕໍ່ພົວພັນ ປະສານກັບພແນກການຕ່າງໆໂດຍສະເພາະກັບອົງການປົກຄອງແຂວງ ແລະພຣະສົງ ເພື່ອລາຍງານຕໍ່ກະຊວງ. ທັມມະການແຕ່ລະແຂວງກໍໄດ້ເອົາໃຈໃສ່ປະຕິບັດວຽກງານໄດ້ພໍສົມ ແຕ່ເຫັນວ່າຍັງມີການອ່ອນສມັຖະພາບ ໃນດ້ານປະຕິບັດ ແລະຂຍາຍກິຈການ ທັງນີ້ກໍເນື່ອງຈາກຖານະບົດບາດຂອງການຈັດຕັ້ງບໍ່ທັນເປັນເຈົ້າຕົນເອງຄືກັບພແນກການອື່ນໆ. ທັມມະການປະຈຳແຂວງ ເວລານີ້ຈຶ່ງພຽງແຕ່ເປັນຫ້ອງການນ້ອຍອັນຫນຶ່ງກັບເຈົ້າແຂວງ, ອຳນາດການບໍຣິຫານວຽກງານແມ່ນຂຶ້ນຢູ່ກັບເຈົ້າແຂວງທັງຫມົດ ຈຶ່ງພາໃຫ້ວຽກງານບໍ່ຄ່ອຍຈະກ້າວຫນ້າ. ດ້ານຫນຶ່ງອີກຂ້າຣາຊການ ແລະ ພາຫະນະກໍມີຈຳນວນບໍ່ພຽງພໍ.

× × ×

× ×

×

ກິຈການທັງຫມົດທີ່ໄດ້ຣາຍງານມານີ້ ກະຊວງທັມມະການ ຖືເປັນວຽກງານທີ່ສຳຄັນຂອງຕົນ. ການດຳເນີນວຽກງານໃນໄລຍະທີ່ຜ່ານມາ ຂອງພວກຂ້າພະພຸທເຈົ້າທັງສອງ ກໍເປັນໄລຍະອັນສັ້ນ ຄືທີ່ໄດ້ຣາຍງານມາແລ້ວໃນເບື້ອງຕົ້ນ ເຫັນວ່າມີຄວາມຫຍຸ້ງຍາກຂາດເຂີນຢູ່ບໍ່ນ້ອຍ. ອີກດ້ານຫນຶ່ງ ໃນປັດຈຸບັນນີ້ ກໍຍັງຢູ່ໃນສະພາບການອັນໃໝ່ ເຮົາຫາກໍຈະພົ້ນຈາກພາວະສົງຄາມມາ

ສູ່ສັນຕິພາບ ຄວາມຂາດຕົກບົກພ່ອງກໍມີຫລາຍ. ໃນສັກຣາດໃຫມ່ນີ້ ປະຊາຊົນຊາວລາວທັງຫມົດຈະຕ້ອງໄປປະກອບສ່ວນເຂົ້າໃນການສ້າງສາພັທນາປະເທດຊາດ ປົວແປງບາດແຜສົງຄາມ ດ້ວຍການທຳຕົນໃຫ້ເຂົ້າຢູ່ໃນຫລັກສິລສມາທິ - ປັນຍາ ຫລື ຫົນທາງແປດອັນໄດ້ແກ່ ໑) ຄວາມເຫັນທີ່ຖືກຕ້ອງ (ສັມມາທິດຖິ), ໒) ຄວາມຄິດທີ່ຖືກຕ້ອງ (ສັມມາສັງກັປປະ), ໓) ການປາກເວົ້າທີ່ຖືກຕ້ອງ (ສັມມາວາຈາ), ໔) ການກະທຳທີ່ຖືກຕ້ອງ (ສັມມາກັມມັນຕະ), ໕) ການດຳເນີນຊີວິດຫລືການຫາລ້ຽງຊີພທີ່ຖືກຕ້ອງ(ສັມມາອາຊີວະ), ໖) ຄວາມມານະພາກພຽນທີ່ຖືກຕ້ອງ (ສັມມາວາຍະມະ), ໗) ຄວາມສຳນຶກທີ່ຖືກຕ້ອງ ( ສັມມາສຕິ), ໘) ຄວາມສຳຣວມໃຈທີ່ຖືກຕ້ອງ (ສັມມາສມາທິ) ຕາມທັມທີ່ອົງພະສັມມາສັມພຸທະເຈົ້າໄດ້ຊົງສັ່ງສອນໄວ້.

ສ າ ທຸ

---

ສຸນ ທອນ ພົດ

ຖແລງນະໂຍບາຍ ແລະໂຄງການສົ່ງເສີມກິຈການດ້ານພຣະພຸທສາສນາ

ຂອງຣັຖມົນຕຣີວ່າການກະຊວງທັມມະການ

ເນື່ອງໃນໂອກາດສຣຸບຜົນຂອງການປະຊຸມສົງ ຄັ້ງໃຫຍ່ ປະຈຳປີ ໑໙໗໔

--------ooo---------

ຂໍນອບນ້ອມແດ່ຄຸນພຣະສີຣັຕນະໄຕຣ

ຂໍນ້ອມເກົ້າກາບທູນອົງສົມເດັດພຣະສັງຄະຣາຊ

ຂໍນ້ອມນະມັສະການພຣະເຖຣານຸເຖຣະເຈົ້າທັງຫລາຍ

ຂໍຣຽນພນະທ່ານ ທ່ານອະທິບໍດີ ແລະພີ່ນ້ອງຂ້າຣາຊການທຸກຄົນ

ການປະຊຸມສົງຄັ້ງນີ້ ນັບວ່າເປັນສັງຄະສັນນິບາດທີ່ມີຄວາມຫມາຍສຳຄັນຍິ່ງໃຫຍ່ ໃນວົງການພຣະສາສນາຂອງເຮົາ ເພາະໄດ້ເຝີດອັນໃນຍຸກເຣີ່ມຕົ້ນແຫ່ງສັກຣາດໃຫມ່ ຄື ໃນຂນະທີ່ປະເທດຊາດກຳລັງໄດ້ຮັບສັນຕິພາບ ພີ່ນ້ອງລາວທັງ ໒ ຝ່າຍໄດ້ຕົກລົງປົງໃຈກັນເຊັນສັນຍາ ແລະອະນຸສັນຍາ ຈັດຕັ້ງຣັຖບານປະສົມ ແລະຄນະມົນຕຣີປະສົມການເມືອງຂື້ນ ເພື່ອບໍຣິຫານປະເທດໃຫ້ດຳເນີນໄປຕາມເສັ້ນທາງສັນຕິພາບ ເອກຣາດ ເປັນກາງ ປະຊາທິປະໄຕ ແລະເອກພາບ ຕາມໂຄງການການເມືອງທີ່ໄດ້ວາງໄວ້ ປະຊາຊົນລາວກຳລັງເບີກບານມ່ວນຊື່ນຕ້ອນຮັບສັນຕິພາບໃຫມ່ ພຣະສົງທັງສອງເຂດກໍມີໂອກາດໄດ້ຮ່ວມປະຊຸມໃນວົງການອັນດຽວກັນເປັນຄັ້ງແຮກ.

ຫລັງຈາກພຣະຄຸນເຈົ້າທັງຫລາຍໄດ້ປະຊຸມປຶກສາກັນຢ່າງຣະອຽດທີ່ຖ້ວນແລ້ວ ກໍໄດ້ມີການ

ປະຊຸມຂັ້ນສູງສຸດຂຶ້ນໃນວັນນີ້ ໂດຍມີອົງສົມເດັດພຣະສັງຄະຣາຊຊົງເປັນປະມຸກທາງຝ່າຍສົງ ແລະ ຣັຖມົນຕຣີກະຊວງທັມມະການເປັນປະທານທາງຝ່າຍບ້ານເມືອງ ຈຸດປະສົງກໍເພື່ອນຳເອົາມະຕິທີ່ທາງຄນະສົງໄດ້ມີຄວາມເຫັນພ້ອມພຽງກັນແລ້ວ ເຂົ້າມາຜ່ານກອງປະຊຸມໃຫຍ່ນີ້ ເພື່ອຮັບຮູ້ກັນເປັນເອກພາບແລ້ວວາງອອກເປັນໂຄງການດຳເນີນງານ ໃຫ້ຖືກຕ້ອງເຫມາະສົມກັບສພາບການ ແລະ ໃຫ້ສອດຄ່ອງກັບໂຄງການການເມືອງຂອງຣັຖບານ ເຮັດໃຫ້ຊາດກັບສາສນາຂອງເຮົາຈະເຣີນຄູ່ຄຽງກັນໄປ.

## ພຣະຄຸນເຈົ້າ ທີ່ເຄົາຣົບ

ເປັນທີ່ຊາບກັນຫຼ້ວວ່າ ລາວເຮົາເປັນຊາດທີ່ນັບຖືສາສນາພຸດມາແຕ່ບູຮານນະການ ຊາວລາວເກືອບທັງຫມົດ ລ້ວນແຕ່ເປັນພຸທມາມະກະ ບັນພະບູຣຸດລາວໃນອະດີດ ຈົນກະທັ້ງເຖິງ ພຣະບາດສົມເດັດພຣະເຈົ້າມະຫາຊີວິດອົງປັດຈຸບັນ ກໍໄດ້ຊົງຍົກຍ້ອງເທີດທູນພຣະພຸທສາສນາໃຫ້ເປັນນື່ງຂວັນຂອງຊາດຕລອດມາ. ດ້ວຍເຫດນີ້ ສິລທັມທາງສາສນາຈື່ງໄດ້ເຊື່ອມຊຶມເຂົ້າສູ່ຈິດໃຈຂອງປະຊາຊົນຢ່າງເລິກເຊິ່ງຈົນກາຍເປັນວິນຍານຂອງຊາດ ໄດ້ອົບຮົມບົ່ມນິສັຍຄົນລາວ ໃຫ້ເປັນຄົນມີນ້ຳໃຈກວ້າງຂວາງເຍືອກເຢັນເພື່ອແຜ່ສູ່ພາບອ່ອນໂຍນ ( ມີຄວາມເມດຕາກະຣຸນາ ຊື່ສັດສຸຈຣິດ ນິ້ມນວນອ່ອນຫວານ ) ແຕ່ຫນັກແຫນ້ນຫມັ້ນຄົງ ຂຍັ່ນຫມັ່ນພຽນ ທໍຣະຫົດອົດທົນ : ມີປຣິຊາສາມາດສລາດຫລັກແຫລມ ເປັນຊາດທີ່ທະນົງອົງອາດບໍ່ຍອມຈຳນົນຕໍ່ການສູນເສັຽເອກຣາດ ແລະສິ່ງທີ່ໄຮ້ເຫດຜົນໂດຍປະການໃດໆ.

ດ້ວຍເຫດນີ້ ປະເທດລາວຈື່ງໄດ້ມີວິຣະບູຣຸດຜູ້ມີຊື່ສຽງດົງດັງໃນປະວັດສາດມາແລ້ວຫລາຍທ່ານເປັນຕົ້ນ ພຣະເຈົ້າຟ້າງູ້ມ ພຣະເຈົ້າໄຊຍະເຊດຖາ ພຣະເຈົ້າສຸຣິຍະວົງສາ ແລະພຣະເຈົ້າອະນຸ. ທ່ານເຫົ່ານີ້ລ້ວນແຕ່ໄດ້ສ້າງວິຣະກັມອັນລ້ຳຄ່າໄວ້ແກ່ຊາດແລະສາສນາ ໂດຍການເສັຽສລະຊີວິດ ແລະເລືອດເນື້ອນຳພາປະຊາຊົນຕໍ່ສູ້ຕ້ານປັ້ນຂ້າເສິກສັຕຣູທີ່ເຂົ້າມາຣຸກຮານຮາວີບ້ານເມືອງປົກປັກຮັກສາດິນແດນສ່ວນນີ້ໄວ້ໃຫ້ເປັນມໍຣະດົກຕົກທອດມາເຖິງພວກເຮົາທຸກວັນນີ້. ຄຽງຄູ່ກັນນັ້ນທາງຝ່າຍພຸທຈັກກໍມີພຣະເຖຣະຫລາຍອົງໄດ້ມີສ່ວນຊ່ວຍເຫລືອຊາດສາສນາຢ່າງສຳຄັນ ເປັນຕົ້ນທ່ານພຣະຄຣູໂພນສະເມັກ ຜູ້ມີນາມລືຊາປາກົດ ກໍໄດ້ມີບົດບາດໃນການສົ່ງເສີມສາສນາ ແລະ ຊ້ວານຊູ້ບ້ານເມືອງໃຫ້ພົ້ນຈາກຄວາມຍຸກເຂັນວູ້ນວາຍໄດ້ຢ່າງຫນ້າອັສຈັນ. ພຣະເຖຣະອົງນີ້ເອງເປັນຜູ້ຈັດຣະບຽບການປົກຄອງໃນນະຄອນຈຳປາສັກ ໃນສມັຍເຣີ່ມຕົ້ນ ທ່ານໄດ້ແຕ່ງຕັ້ງເຈົ້າສ້ອຍສີສມຸດພຸດທັງກູນ ຂຶ້ນເປັນເຈົ້າອົງຄອງນະຄອນ ແລະ ປ່ຽນຊື່ເມືອງ ຈາກຄຳວ່າ " ນະຄອນກາລະຈຳບາກນາກຄະບູຣີສີ " ມາເປັນ " ນະຄອນຈຳປາສັກນັກຄະບູຣີ ". ເຈົ້າເມືອງງໂຂງ

ແລະ ເມືອງຊຽງແຕງກໍແມ່ນພຣະເຖຣະອົງນີ້ ເປັນຜູ້ແຕ່ງຕັ້ງຂຶ້ນເປັນຄັ້ງແຣກ, ນອກນີ້ ທ່ານຍັງໄດ້ນຳພາປະຊາຊົນຊາວພຸດສ້າງບູຮານວັດຖຸ ພຣະທາດເຈດີ ແລະພຣະພຸທຮູບອົງສຳຄັນໆ ໄວ້ໃຫ້ເປັນທີ່ຂາບໄຫວ້ສັກກາຣະບູຊາຫລາຍແຫ່ງ ເຊັ່ນພຣະແສນທີ່ເມືອງຊຽງແຕງ ທາດຫີນວັດຄອນໃຕ້ ຣະຄັງໃຫຍ່ແລະຕົ້ນໂພສ່ຽງ ທີ່ວັດກາງເມືອງໂຂງເປັນຕົ້ນ.

## ພຣະເຖຣະເຈົ້າ ທີ່ເຄົາຣົບ

ແຕ່ປາງກ່ອນມາ ວັດວາສາສນາໄດ້ເປັນຮາກເຫງົ້າແລະໂຄງຮ່າງອັນສຳຄັນຂອງສັງຄົມ ວັດເປັນສະໂມສອນສູນກາງອົບຮົມສິລທັມວັທນະທັມ ແລະຮີດຄອງປະເພນີອັນດີງາມຂອງຊາດ ເປັນທັງໂຮງຮຽນແລະມະຫາວິທຍາລັຍໃຫຍ່ທີ່ປະສິດປະສາດວິຊາຄວາມຮູ້ນາກນາຍຫລາຍສາຂາ, ອັກສອນສາດ ວັນນະຄະດີ ແລະວິຊາຊ່າງສິລປະຕ່າງໆ ເຊັ່ນຊ່າງໄມ້ ຊ່າງປັ້ນ ຊ່າງກໍ່ ຊ່າງຈັກສານ ຊ່າງຄວັດດອກດວງລວດລາຍ ຕລອດຮອດຊ່າງໂລຫະທາດຫລອມຫລໍ່ຕ່າງໆ, ກໍລ້ວນແຕ່ເກີດຈາກຄວັດທັງສົ້ນ. ນອກນີ້ ວັດຍັງເປັນບ່ອນປິ່ນປົວຄົນເຈັບໄຂ້ໄດ້ປ່ວຍ ທັງເປັນສານປະນອມອົບຮົມປະຊາຊົນເຊັ່ນເມື່ອຊາວບ້ານເກີດຜິດຖຽງຕອງຖຽງ ຫລືຜົວເມັຽບໍ່ສາມັກຄີກົນກຽວກັນ ກໍໄດ້ອາສັຍພຣະສົງເອົາສິລທັມຊ່ວຍອົບຮົມໄກ່ເກັ່ຽໃຫ້ຖືກຕອງຮັກແພງກັນໄດ້ເປັນຢ່າງດີ. ຍິ່ງໄປກວ່ານັ້ນ ພຣະສົງຍັງມີບົດບາດນຳພາໃນການສ້າງສາພັທນາໝູ່ບ້ານ ເຊັ່ນຊ່ວຍພາຊາວບ້ານຂຸດນ້ຳບໍ່ກສາລາ ສ້າງໂຮງຮຽນໂຮງໝໍ ສ້າງຖນົນຫົນທາງແລະການປູກຝັງຕ່າງໆ ຕລອດຮອດປູກຢາວແປງເຮືອນໃຫ້ພໍ່ແມ່ແລະຍາດໂຍມຜູ້ທຸກຍາກຂາດເຂີນທົ່ວໄປ ຈົນບ້ານເມືອງເຮົາມີຄວາມຈະເຣີນກ້າວໜ້າ ເປັນປຶກແຜ່ນແໜ້ນໜາມີຮາກຖານທາງເສຖກິດແລະວັທນະທັມໝັ້ນຄົງອຸດົມສົມບູນສືບມາ.

ດ້ວຍອາສັຍອິດທິພົນແລະທັມມານຸພາບຂອງສາສນາດັ່ງກ່າວມານີ້ ຄົນລາວເຮົາຈຶ່ງມີຄວາມຮັກຊາດແລະຍຶດຖືປະເພນີວັທນະທັມຂອງຊາດ ເປັນຊີວິດຈິດໃຈຕລອດມາ. ເຖິງໃນຄາວທີ່ເຮົາຕົກເປັນເມືອງຂຶ້ນຂອງຝຣັ່ງ ເຮົາກໍສູນເສັຽແຕ່ເອກຣາດທາງດ້ານການເມືອງເທົ່ານັ້ນ, ແຕ່ຄວາມເປັນລາວແລະຮີດຄອງວັທນະທັມອັນເປັນເຄື່ອງໝາຍປະຈຳຊາດຂອງເຮົານັ້ນຍັງຄົງຢູ່ ເຮົາຍັງພ້ອມກັນຖນອມຮັກສາໄວ້ໄດ້ຢ່າງສົມບູນເຖິງວ່າບາງຄັ້ງ ຝຣັ່ງເສດພຍາຍາມຂົ່ມຂູ່ຈະລົບລ້າງວັດວາສາສນາພາສາ ແລະ ໜັງສືຂອງເຮົາ ພຣະສົງແລະປະຊາຊົນລາວກໍໄດ້ພ້ອມກັນຕໍ່ສູ້ປ້ອງກັນຢ່າງອົງອາດກ້າຫານ. ເຊັ່ນຄັ້ງໜຶ່ງ ຢູ່ທາງເມືອງໂຂງ ຝຣັ່ງເສດໄດ້ເກັບເກນເອົາສ່ວຍສາອາກອນຈາກພຣະເນນໃນວັດ ຄາວນັ້ນ ພຣະສົງແລະປະຊາຊົນລາວທັງໝົດໃນເຂດນັ້ນ ຊຶ່ງມີອະດີດພຣະອາຈານຫລັກຄຳ ຈັນທາເປັນຫົວໜ້າ ກໍໄດ້ຫລັ່ງໄຫລເຂົ້າມາຕໍ່ສູ້ກັບຝຣັ່ງຢ່າງເດັດດ່ຽວ ທນຽວແໜ້ນ ຈົນຝຣັ່ງຕ້ອງຍອມຍົກເລີກການເກັບສ່ວຍນັ້ນ. ອີກຄັ້ງໜຶ່ງ ຣະຫວ່າງປີ ໑໙໔໐-໔໑ ຝຣັ່ງເສດຈະເອົາໂຕໜັງສືໂຣມັງມາໃຊ້ແທນໜັງສືລາວ ຄາວນັ້ນ ເຈົ້ານາຍລາວຫລາຍຄົນພ້ອມທັງ

ພຣະສົງອົງເຈົ້າຣວມທັງຕົວຂ້າພະພຸທເຈົ້າເອງດ້ວຍ ກໍໄດ້ຕໍ່ສູ້ຄັດຄ້ານຢ່າງແຂງຂັນທີ່ສຸດ ຈົນຝຣັ່ງເສດຕ້ອງຍອມປະຕິບັດຕາມ.

ຕໍ່ມາເຖິງປີ ໑໙໔໕ ສົງຄາມຝາຊິສຍີ່ປຸ່ນໄດ້ເຂົ້າຍຶດອຳນາດຈາກຝຣັ່ງເສດໃນອິນໂດຈີນ ຂນະນັ້ນ ພໍດີໄດ້ໂອກາດ ເລືອດລາວຜູ້ຮັກຊາດ ຄືຂບວນລາວອິສຣະໄດ້ນຳພາປະຊາຊົນລຸກຮື້ຂຶ້ນ ຍຶດອຳນາດຈາກລັດທິຝາຊິສຍີ່ປຸ່ນ ແລ້ວຈັດຕັ້ງຣັຖບານປະກາດເອກຣາດຂຶ້ນໃນວັນທີ່ ໑໒ ຕຸລາ ໑໙໔໕. ແຕ່ຫລັງຈາກນັ້ນປີດຽວ ຝຣັ່ງເສດໄດ້ກັບມາຮຸກຮານລາວ ແລະປະເທດອື່ນໆໃນອິນໂດຈີນອີກ ຂບວນການລາວອິສຣະ ກໍໄດ້ດຳເນີນການຕໍ່ຕ້ານຢ່າງແຂງຂັນຕໍ່ໄປ ເຖິງປີ ໑໙໔໙ ຝຣັ່ງເສດຈຶ່ງຍອມມອບເອກຣາດໃຫ້ ແຕ່ເປັນເອກຣາດທີ່ຍັງຢູ່ໃນເຄືອສະຫະພັນຝຣັ່ງເສດ. ດ້ວຍເຫດນີ້ ຂບວນການລາວອິສຣະຈຳນວນໜຶ່ງຊຶ່ງນຳໂດຍສເດັດເຈົ້າສຸພານຸວົງ ກັບຄນະ ຄື ແນວລາວຮັກຊາດໃນປັດຈຸບັນຈຶ່ງບໍ່ຍອມຮັບເອົາເອກຣາດແບບຢູ່ໃນເຄືອສະຫະພັນນັ້ນ ໄດ້ນຳພາປະຊາຊົນຕໍ່ສູ້ປະສານສົມທົບກັບຂບວນກູ້ຊາດຂອງປະຊາຊົນ ໓ ຊາດໃນອິນໂດຈີນ ຈົນສາມາດໄດ້ຮັບເອກຣາດອັນສົມບູນໃນປີ ໑໙໕໔.

ເມື່ອເຮົາປົດແອກຈາກຝຣັ່ງເສດ ບ້ານເມືອງໄດ້ຮັບເອກຣາດແລ້ວ ກໍໜ້າຈະເປັນໂຊກດີຂອງຄົນລາວທີ່ຈະໄດ້ຕັ້ງໜ້າທຳມາຫາກິນດ້ວຍຄວາມສງົບສຸກ. ແຕ່ໜ້າເສັຽດາຍທີ່ສຸດ ຫລັງຈາກເຮົາມີໂອກາດໄດ້ຊື່ນຊົມກັບແສງສວ່າງແຫ່ງອິສຣະພາບພຽງປີດຽວ ໄຟສົງຄາມລັດທິລ່າເມືອງຂຶ້ນແບບໃໝ່ຂອງຈັກກະພັດອະເມຣິກາ ກໍໄດ້ຮຸກລາມເຂົ້າມາເຜົາຜານບ້ານເມືອງຂອງເຮົາອີກຢ່າງຮ້າຍກາດທວີຄູນ ອຸບາຍອອກໜ້າອັນສຳຄັນ ເຂົາໄດ້ໃຊ້ເສຖກິດການເງິນເປັນເຫຍື່ອລໍ້ຈ ໝອອຍ ທຳທ່າເປັນນັກບຸນມາຊ່ວຍເຫລືອຄົນຂມອດ ແທ້ຈິງແມ່ນນັກບຸນຜູ້ໃຈບາບ ແບບເສືອເຖົ້າຈຳສິນ. ດ້ວຍເຫດນີ້ຈຶ່ງໄດ້ມີຄົນລາວຈຳນວນໜຶ່ງ ທີ່ທະເຍີທະຍານນຳຄວາມຮັ່ງມີລ້ຳລວຍ ມັກໃຫຍ່ໃຝ່ສູງ ເນົາແຕ່ນຳເງິນແສນໃດ່ ບໍ່ເຫັນແກ່ໄພ່ແສນເມືອງ ເຫັນກົງຈັກເປັນດອກບົວ ຍອມມອບໂຕເປັນເຄື່ອງມືຮັບໃຊ້ສົງຄາມໃຫ້ເຂົາ ຫັນມາທຳລາຍລ້າງຜານພີ່ນ້ອງບ້ານເມືອງຂອງຕົນເອງ ເພື່ອສ້າງວິມານຄວາມສຸກບົນກອງກະດູກແລະເລືອດເນື້ອຂອງພີ່ນ້ອງຮ່ວມຊາດ ໂດຍບໍ່ມີຈິດໃຈຫວ່ງໄຍນຳຊາຕາກັມຂອງບ້ານເມືອງແຕ່ປະການໃດ.

ສົງຄາມອັນຮ້າຍກາດຍາວນານນີ້ ໄດ້ສ້າງຄວາມວິນາດຈິບຫາຍໃຫ້ແກ່ປະເທດຊາດສາສນາຂອງເຮົາຢ່າງຮ້າຍແຮງເຫລືອປະມານ ທັງທາງກົງ ແລະທາງອ້ອມ ທາງກົງກໍຄື ໄດ້ຢຽບຍ່ຳທຳລາຍເອກຣາດ ອຳນາດ ອະທິປະໄຕ ນ້າງເພຊັບສິນສົມບັດ ເຜົາຜານເຮືອນຊານບ້ານຊ່ອງວັດວາອາຣາມ ຜູ້ຄົນຖືກລົ້ມຕາຍທັງເຖົ້າແກ່ຍິງຊາຍນ້ອຍໃຫຍ່ເຫລືອທີ່ຈະຄັນນະນາ ພົວຕາຍພັດເມັຍ

ເມັຽຕາຍພັດຜົວ ລູກເຕົ້າຮ້ອງໄຫ້ຫາພໍ່ແມ່ ເປັນກຳພ້າກຳພອຍອຶດຢາກຍາກແຄ້ນ ແສນຈະເວທນາ. ນອກນີ້ ພີ່ນ້ອງຮ່ວມຊາດຍັງຖືກຕັດສິດເສຣີພາບ ຖືກຈັບກຸມຄຸມຂັງທຸບຕີທໍຣະມານຢ່າງບໍ່ເປັນທັມ ຕລອດຮອດພຣະສົງອົງເຈົ້າຈະອອກເທສນາວ່າກ່າວຕາມໜ້າທີ່ສະມະນະ ກໍຍັງຖືກຈຳກັດຮັດແຄບ ຖືກປາບ ນາບຂູ່ ແລະຈັບກຸມກໍມີ.

ຜົນເສັຽຫາຍທາງອ້ອມ ກໍຄືເຮັດໃຫ້ສພາບເສຖກິດຂອງປະເທດຖືກມ້າງເພເສື່ອມໂຊມ ບ້ານເມືອງເກີດອຶດຢາກຍາກແຄ້ນຢ່າງໜັກໜ່ວງ ປະຊາຊົນຖືກຄ່າຄອງຊີບບີບຮັດແທບຈະເອົາຊີວິດບໍ່ລອດ, ສະພາບຂອງສັງຄົມ ແລະວັທະນະທັມເສື່ອມໂຊມເຖິງຂນາດ ວົງການພະນັນເຖື່ອນ ໂຮງສຸຣານາຣີ ແລະ ບາເຕັ້ນລຳຕ່າງໆເກີດຂຶ້ນທົ່ວບ້ານທົ່ວເມືອງ. ໃນວົງຣາຊການກໍມີການສໍ້ຣາດບັງຫລວງ ຫລີ້ນພັກຫລີ້ນພວກ ເກີດຄວາມເຫລື່ອມລ້ຳຕ່ຳສູງ ຫາຄວາມຍຸຕິທັມໄດ້ຍາກ, ຜູ້ມີອຳນາດຮ່ວມກັບພໍ່ຄ້າຕ່າງດ້າວຕັ້ງຫ້າງຮ້ານບໍຣິສັດຫາຄວາມລ້ຳລ ຊາວຕ່າງດ້າວໄດ້ອິດທິພົນໜູນຫລັງ ກໍຢູ່ທາງຊູດເນື້ອເຖືອໜັງຄົນລາວຢ່າງບໍ່ອິດູກູມາ ບ້ານເມືອງຂາດຣະບຽບວິນັຍ ເກີດການປົ້ນປ່ວນມີການລັກເລັກຂະໂມຍນ້ອຍ ຂ້າເຈົ້າເອົາຂອງ ປົ້ນສະດົມຂົ່ມຂືນຊຳເລົາ ຈົນເກີດຄວາມສັບສົນຂຶ້ນຢ່າງໜ້າວິຕົກ.

ຜົນເສັຽຫາຍອັນໜ້າວິຕົກມາກອີກອັນໜຶ່ງ ກໍຄືພວກຊາຍໜຸ່ມຍິງສາວຈຳນວນໜຶ່ງ ທີ່ຈະເປັນກຳລັງຂອງປະເທດຊາດໃນອະນາຄົດ ໄດ້ພາກັນຫລົງໄປນິຍົມຊົມຊອບນຳສມັຍສີວິລັຍ ອັນປອມແປງຂອງຈັກພັດ ພາກັນປະພຶດໂລເລໂລດໂຜນເກີນຂອບເຂດເຊັ່ນຜູ້ຍິງ ແທນທີ່ຈະນຸ່ງຫົ່ມໃຫ້ຮຽບຮ້ອຍ ມີມາຣະຍາດນິ່ມນວນອ່ອນຫວານ ເປັນກຸລະສັຕຣີທີ່ດີງາມຂອງຊາດ ກໍພາກັນໄປນຸ່ງສົ້ງຂາເຫວີຂາຍ່ານ. ບໍ່ດັ່ງນັ້ນ ກໍນຸ່ງສົ້ງຫລີກກຳໂປ່ງທຣົນເອີນ ຈົນເກືອບຈະບໍ່ມີເສື້ອຜ້າຕິດໂຕ ທັງແຕກຄອກອອກແຖວ ເພີ່ມນຳການຫລີ້ນການກິນໄປຕາມເພັງເລື້ອຍໆ. ທາງຜູ້ຊາຍກໍລັກສນະດຽວກັນ ເຊັ່ນນຸ່ງຫົ່ມສົ້ງເສື້ອຍຸ່ມຍ່າມ ຜົມຍາວປົກບ່າ ຈັບກຸ່ມກັນທັງຍິງທັງຊາຍຍ່າງຫລີ້ນເຣຣາບາງທີກໍເກີດຂ້າຕີກັນຕາມຖົນົນຫົນທາງຫລືຄຸ້ມຕ່າງໆ, ແຖມບາງຄັ້ງຍັງອຸດຕະຣິໄປສູບຝິ່ນກິນຄົນຊາອີ່ເລເກມັງເຮັດໄປຮ້ອຍແປດ ເປັນຄົນແຕກປອກແຕກຄອກ ເສັຽຜູ້ເສັຽຄົນໄປເປັນຈຳນວນຫລວງຫລາຍ.

ທີ່ເລົ່າມາທັງໝົດນີ້ ແມ່ນຜົນເສັຽຫາຍອັນໃຫຍ່ຫລວງທີ່ສືບເນື່ອງມາຈາກສົງຄາມລັດທິລ່າເມືອງຂຶ້ນແບບໃໝ່ທີ່ຄຸກຄາມຕໍ່ບ້ານເມືອງຂອງເຮົາ. ແຕ່ກໍຍັງນັບວ່າເປັນໂຊກດີກຸງສີສັຕນາຄະນະ-ຫູດຍັງບໍ່ສິ້ນສູດຄົນດີ. ດ້ວຍຄຸນນານຸພາບແຫ່ງພຣະພຸທສາສນາ ພວກເຮົາຊາວລາວຜູ້ມີວິນຍານແຫ່ງຄວາມຮັກຊາດ ແລະ ໄດ້ສືບມູນເຊື້ອພີ່ຣະອາດຫານມາຈາກບັນພະບຸຣຸດຜູ້ເກັ່ງກ້າຂອງເຮົາ ໄດ້ນຳພາປະຊາຊົນຕໍ່ສູ້ຕ້ານຢັນກັບສົງຄາມອະທັມອັນໂຫດຮ້າຍຢ່າງປ່າເຖື່ອນນີ້ ຢ່າງເດັດດ່ຽວໜຽວແໜ້ນ ແລະຍຶດເຍື້ອຍາວນານເກືອບເຖິງ ໒໐ ປີ, ຈຶ່ງສາມາດຍາດເອົາໄຊຊະນະມາສູ່ປະເທດຊາດໄດ້ຢ່າງສງ່າ

ຜ່າເພີຍ, ໂດຍທີ່ລາວທັງສອງຝ່າຍໄດ້ຕົກລົງເຈຣະຈາເຊັນສັນຍາສັນຕິພາບ ຈັດຕັ້ງຣັຖບານປະສົມຂຶ້ນບໍຣິຫານປະເທດ ເປັນເຄື່ອງໝາຍໃຫ້ຮູ້ວ່າແປວໄຟສົງຄາມໄດ້ດັບມອດລົງແລ້ວ ສັນຕິພາບກຳລັງເກີດຂຶ້ນໃນບ້ານເມືອງ, ປະຊາຊົນກຳລັງຊື່ນຊົມຕ້ອນຮັບສັນຕິພາບໃໝ່ກັນທົ່ວປະເທດ. ໃນຂນະດຽວກັນຣັຖບານສະຫະຣັຖອະເມຣິກາກໍໄດ້ເຄົາຣົບນັບຖືອະນຸສັນຍາດັ່ງກ່າວ ປະຊາຊົນລາວທັງຊາດມີຄວາມຫວັງເປັນຢ່າງຍິ່ງວ່າ ຈະເປັນເພື່ອນມິດອັນສນິດແໜ້ນ ກັບປະຊາຊົນອະເມຣິກາຕໍ່ໄປ.

ບັດນີ້ ສັນຍາແລະອະນຸສັນຍາໄດ້ກາຍເປັນກົດໝາຍຂອງຊາດ ຣັຖບານປະສົມຊົ່ວຄາວແຫ່ງຊາດ ກຳລັງເລັ່ງດຳເນີນງານບໍຣິຫານປະເທດໃຫ້ກ້າວໄປຕາມເສັ້ນທາງສັນຕິພາບ ເອກຣາດ ເປັນກາງ ປະຊາທິປະໄຕ ເອກພາບ ແລະ ວັທນາຖາວອນ. ຄນະມົນຕຣີປະສົມການເມືອງແຫ່ງຊາດ ກໍໄດ້ຜ່ານໂຄງການການເມືອງ ໑໘ ຂໍ້ ແລະ ຂໍ້ກຳໜົດວ່າດ້ວຍສິດເສຣີພາບຮຽບຮ້ອຍແລ້ວ. ປະຊາຊົນທຸກຖ້ວນໜ້າຈະໄດ້ພ້ອມກັນສ້າງສາພັທນາປະເທດໃຫ້ຮຸ່ງເຮືອງສີວິໄລຕໍ່ໄປ.

ຄວາມຈິງຖືງແມ່ນວ່າ ສົງຄາມຮຸກຮານທາງດ້ານອາວຸດໄດ້ຍຸຕິລົງ ສັນຕິພາບໄດ້ເກີດຂຶ້ນແລ້ວກໍຕາມ ແຕ່ພົນເສັຍຫາຍທາງອ້ອມອັນສືບເນື່ອງມາຈາກສົງຄາມ ຊຶ່ງເຮັດໃຫ້ສີລທັມວັທນະທັມຂອງຊາດເຊື່ອມຊາມລົງ ສພາບຂອງສັງຄົມແຫລວແຫລກດັ່ງກ່າວມາແລ້ວນັ້ນ ຍັງຄົງຄ້າງຢູ່ໃນບ້ານເມືອງຂອງເຮົາ. ການຈະແກ້ໄຂສພາບຂອງສີລທັມແລະສັງຄົມດັ່ງກ່າວນີ້ ນັບເປັນພາຣະອັນໜັກໜ່ວງຈຳຕ້ອງໄດ້ອາສັຍຄວາມຮ່ວມໄມ້ຮ່ວມມືຈາກທຸກຄົນໃນຊາດຊ່ວຍເຫລືອກັນ ໂດຍສະເພາະແມ່ນພຣະສົງໃນສາສນາ ຈະຕ້ອງມີບົດບາດສຳຄັນ ປະກອບສ່ວນເຂົ້າໃນການຟື້ນຟູບູຣະນະສິ່ງເຊື່ອມຊາມເຫລົ່ານີ້ຢ່າງຂຍັນຂັນແຂງ ເໝືອນກັບພຣະເຖຣະອົງສຳຄັນ ໄດ້ເຄີຍດຳເນີນເປັນຕົວຢ່າງມາແລ້ວໃນອະດີດ. ເພາະສນັ້ນ ຈິ່ງເປັນໂອກາດທີ່ທາງຝ່າຍສາສນາເຮົາ ຈະໄດ້ປັບປຸງແກ້ໄຂແລະວາງໂຄງການດຳເນີນງານໃຫ້ກ້າວໜ້າ ຄູ່ຄຽງກັນໄປກັບຝ່າຍບ້ານເມືອງ ໃຫ້ສົມກັບວ່າ " ຊາດ ກັບ ສາສນາ ເປັນຂອງຄູ່ກັນ " ດ້ວຍເຫດນີ້ ຂ້າພະພຸທເຈົ້າໃນນາມຣັຖມົນຕຣີວ່າການກະຊວງທັມມະການ ຜູ້ຕາງໜ້າຣັຖບານ ແລະ ເພື່ອຕອບສນອງພຣະຣາຊປະສົງຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດ ໃນການອຸປະຖັມຄ້ຳຊູພຣະພຸທສາສນາ ຈຶ່ງໄດ້ຮວບຮວມເອົາມະຕິ ຂໍ້ຕົກລົງຂອງພຣະຄຸນເຈົ້າທັງຫລາຍມາຮຽບຮຽງ (ເປັນໂຄງການ) ຂຶ້ນ (ແລ້ວວາງ) ເປັນນະໂຍບາຍໃຫຍ່ ທີ່ຈະດຳເນີນງານຕໍ່ໄປຂ້າງໜ້າ ດັ່ງຕໍ່ໄປນີ້ ຄື :

໑/- ກະຊວງທັມມະການ ຈະສົ່ງເສີມພຣະສົງສາມະເນນ ໃຫ້ປະຕິບັດຣິດຄອງທາງສາສນາໃຫ້ຖືກຕ້ອງຕາມພຣະທັມມະວິນັຍ.

໒/- ຈະສົ່ງເສີມແລະສນັບສນູນໃຫ້ພຣະພິກຂຸສາມະເນນ ໄດ້ຮັບການສຶກສາ ທັງທາງໂລກ ແລະ ທາງທັມ ໃຫ້ມີຣະດັບສູງ ທັງຄຸນພາບແລະປະຣິມານ.

ຄ/- ຈະສນັບສນູນໃຫ້ພຣະສົງໄດ້ມີໂອກາດເທສນາເຜີຍແຜ່ສິລທັມ ໃຫ້ເຂົ້າເຖິງຈິດໃຈຂອງປະຊາຊົນຢ່າງເລິກເຊິ່ງ ທັງໃນຕົວເມືອງແລະຊົນນະບົດ ເພື່ອໃຫ້ປະຊາຊົນໄດ້ເປັນພົລເມືອງດີຂອງຊາດ ແລະ ເປັນພຸທທບໍຣິສັດທີ່ດີຂອງສາສນາຢ່າງແທ້ຈິງ.

ງ/- ຈະເອົາໃຈໃສ່ບູຣະນະປະຕິສັງຂອນແລະຄຸ້ມຄອງຮັກສາວັດວາອາຣາມ ພຣະພຸທທຮູບ ສຖູບເຈດີ ບູຣານວັດຖຸ ບູຣານສຖານ ແລະປູຊະນີຍະສຖານຂອງຊາດໃຫ້ໝັ້ນຄົງຖາວອນ.

ຈ/- ການຈັດຕັ້ງສະມາຄົມທາງສາສນາທັງຫລາຍ ຈະຕ້ອງໃຫ້ຜ່ານຄວາມເຫັນດີເຫັນຊອບຈາກຄນະກັມມາທິການບໍຣິຫານສົງເສັຽກ່ອນ ແລ້ວກະຊວງທັມມະການຈຶ່ງຈະອອກອະນຸຍາດການຈັດຕັ້ງເປັນທາງການ ທັງນີ້ ເພື່ອໃຫ້ກິຈການດ້ານສາສນາໄດ້ເປັນໄປໃນແນວທາງອັນຖືກຕ້ອງ ແລະເພື່ອຫລີກເວັ້ນບໍ່ໃຫ້ສະມາຄົມທາງສາສນາໄດ້ຖືກໃຊ້ໄປເປັນເຄື່ອງມືໃນທາງອື່ນ.

ການທີ່ຈະໃຫ້ເປັນໄປຕາມນະໂຍບາຍດັ່ງກ່າວນີ້ ຂ້າພະພຸທທເຈົ້າ ກໍໄດ້ວາງເປັນໂຄງການແລະທິດທາງໃຫ່ຍ ດັ່ງຕໍ່ໄປນີ້ :

໑/- <u>ດ້ານການປົກຄອງສົງ</u> ຈະໄດ້ດັດແປງແກ້ໄຂພຣະຣາຊໂອງການປົກຄອງສົງຂຶ້ນໃໝ່ ໃຫ້ພຣະສົງໄດ້ມີສິດປົກຄອງແລະບໍຣິຫານກິຈການຂອງຄນະສົງເອງ ພາຍໃນຂອບເຂດພຣະທັມມະວິນັຍແລະກົດໝາຍຂອງບ້ານເມືອງ ຕາມຄວາມປະສົງຂອງຄນະສົງທີ່ໄດ້ມີມະຕິໄວ້ ໂດຍມີກະຊວງທັມມະການເປັນຜູ້ຖວາຍການອຸປະຖັມ ແລະຮັບຜິດຊອບຕາງໜ້າຣັຖບານ ທັງພາຍໃນແລະຕ່າງປະເທດ.

ຈະໃຫ້ມີການສັມມະນາສົງຂຶ້ນ ທັງໃນສ່ວນກາງແລະສ່ວນພູມີພາກ ເພື່ອອົບຮົມຊີ້ແຈງໃຫ້ເຂົ້າໃຈໃນຣະບຽບບໍຣິຫານ ການປະຕິບັດພຣະທັມມະວິນັຍ ແລະ ການເທສນາເຜີຍແຜ່ສິລທັມເປັນຕົ້ນ.

໒/- <u>ດ້ານເຜີຍແຜ່ສິລທັມ</u> ຈະໄດ້ຮ່ວມກັບຄນະສົງວາງແຜນຄົ້ນຄວ້າຊອກຫາເນື້ອໃນສິລທັມອັນເໝາະສົມກັບສພາບການຕົວຈິງຂອງບ້ານເມືອງໃນປັດຈຸບັນ ໃຫ້ພຣະສົງໄດ້ນຳໄປເທສນາເຜີຍແຜ່ ມຸ້ງໄປທາງທິດຖະທັມມິກັດຖະປະໂຍດ ມາກກວ່າທາງສັມປະຣາຍິກັດຖະປະໂຍດ ຄື:

ກ)- ເທສນາຊີ້ນຳປະຊາຊົນ ໃຫ້ຕັ້ງໃຈຟື້ນຟູສິລທັມວັທນະທັມ ຕລອດເຖິງຮີດຄອງປະເພນີຂອງຊາດ ທີ່ໄດ້ເຊື່ອມໂຊມໄປແລ້ວນັ້ນ ໃຫ້ຈະເຣີນງອກງາມເຂົ້າສູ່ສພາບປົກຕິດັ່ງເດີມ.

ຂ)- ຊີ້ນຳປະຊາຊົນໃຫ້ຂຍັນໝັ່ນພຽນຟື້ນຟູເສຖກິດພື້ນຖານເກົ່າແກ່ຂອງເຮົາ ເຊັ່ນ ການເຮັດໄຮ່ ເຮັດນາ ຮົ້ວສວນ ປູກຝັງ ຕຳຫູກທໍໃໝ ແລະ ອຸດສາຫະກັມພາຍໃນຄອບຄົວອື່ນໆ ໃຫ້ສັງຄົມລາວມີຄວາມອຸດົມສົມບູນ ເຂັ້ມແຂງເພິ່ງໂຕເອງໄດ້ ໃນທາງດ້ານເສຖກິດ.

ຄ)- ເທສນາຊັກຊວນປະຊາຊົນໃຫ້ມີຈິດໃຈໃນການສ້າງສາພັທນາ ປະໂຍດສ່ວນຣວມຂອງຊາດ ເຊັ່ນ ພາກັນສ້າງຖນົນຫົນທາງ ສ້າງໂຮງໝໍໂຮງຮຽນ ຂຸດນ້ຳບໍ່ກໍ່ສາລາ ແລະ ສ້າງວັດວາອາຣາມ ເຮັດໃຫ້ຊາດ ສາສນາ ຈະເຣີນຮຸ່ງເຮືອງຕໍ່ໄປ.

ງ) ຈັດໃຫ້ມີໂຮງຮຽນສິດສອນລູກຫລານຊາວບ້ານ ຜູ້ທຸກຍາກຂາດເຂີນ ໃຫ້ອ່ານອອກຂຽນໄດ້ ຮູ້ຈັກໄລ່ເລກພານາທີຫລືວິຊາຊີບ ຊ່າງສິລປະອື່ນໆ.

ຈ) ແນະນຳຊາວບ້ານໃຫ້ມີຄວາມສາມັກຄີຮັກແພງກັນ ປູ້ມລູມຊ່ວຍເຫລືອກັນໃນວຽກການ ຕ່າງໆ ເຊັ່ນການເຮັດໄຮ່ເຮັດນາ ປູກຢ້າວແປງເຮືອນ ຫລືວຽກການສຳຄັນອື່ນໆ ພຣະສົງເອງກໍອາດ ນຳພາເຂົາເຈົ້າໃນພາກປະຕິບັດຕົວຈິງ ໂດຍສະເພາະໃນສິ່ງທີ່ບໍ່ຂັດຕໍ່ພຣະທັມມະວິນັຍ.

ສ) ພຍາຍາມຟື້ນຟູຣະບົບຢາແຜນບູຮານ ເພື່ອຊ່ວຍເຫລືອປິ່ນປົວພໍ່ແມ່ປະຊາຊົນທີ່ຢູ່ໃນເຂດທຸຣະ ກັນດານ ຫ່າງໄກໂຮງໝໍຫລວງ ດັ່ງທີ່ຄຣູບາອາຈານເຄີຍເຮັດມາແຕ່ກ່ອນ.

໓/- <u>ດ້ານການສຶກສາສົງ</u> - ກະຊວງທັມມະການຈະວາງໂຄງການຂຍາຍໂຮງຮຽນປຣິຍັດຕິ ທັມ ທັງຊັ້ນປະຖົມ ແລະມັທຍົມໃຫ້ກວ້າງຂວາງອອກ ທັງໃຫ້ມີຄວາມກ້າວໜ້າໃນດ້ານຄູນພາບ ແລະ ປະຣິມານ ໃນອະນາຄົດອັນໃກ້ນີ້ ຈະໄດ້ຕັ້ງສູນອົບຮົມຄຣູໃຫ້ເປັນການຖາວອນກັບຈະໄດ້ຂຍາຍໂຮງ ຮຽນມັທຍົມ ຈາກມັທຍົມຕົ້ນໃຫ້ເຖິງມັທຍົມປາຍ ເພື່ອຈະໄດ້ກ້າວຂຶ້ນເຖິງຂັ້ນມະຫາວິທຍາລັຍໃນອາ ນາຄົດ ຈຸດປະສົງກໍເພື່ອໃຫ້ນັກສຶກສາທາງສາສນາໄດ້ມີຄວາມຮູ້ຄວາມສາມາດ ຊ່ວຍເສີມສ້າງພົນງານ ໃຫ້ແກ່ຊາດແລະສາສນາຍິ່ງຂຶ້ນ ແຕ່ການຈະຍົກຣະດັບຄວາມຮູ້ໃຫ້ໄດ້ມາຕຣາຖານນີ້ ກໍຈະໄດ້ຮ່ວມມືປະ ສານງານກັບກະຊວງສຶກສາທິການ ວາງເປັນຫລັກສູດໃຫ້ມີຖານະເທົ່າທຽມກັນ.

໔/- <u>ດ້ານບູຮານຄະດີ</u> - ມີໂຄງການຈະຄູ້ມຄອງຮັກສາບູຮານວັດຖຸ ບູຮານສຖານສິລປະວັດຖຸ ຕລອດເຖິງໜັງສືໃບລານ ແລະຄັມພີດີກາອັນເກົ່າແກ່ຂອງຊາດ ໂດຍສະເພາະໃນອະນາຄົດອັນໃກ້ນີ້ ຈະໄດ້ຕັ້ງພິພິທພັນສ່ວນກາງຢູ່ທີ່ນະຄອນວຽງຈັນແຫ່ງໜຶ່ງ ກັບພິພິທພັນສ່ວນພູມີພາກອີກ ໔ ແຫ່ງ ຄື ທີ່ ຫລວງພຣະບາງ ແລະປາກເຊ ເພື່ອເປັນທີ່ຮວບຮວມ ແລະຈັດວາງສແດງບູຮານວັດຖຸ ສີໄມ້ລາຍມື ອັນເກົ່າແກ່ຂອງຊາດ ໃຫ້ປະຊາຊົນໄດ້ເບິ່ງໄດ້ຊົມ ສຶກສາຫາຄວາມຮູ້ຕາມສົມຄວນ.

ສະເພາະຫໍພິພິທພັນສ່ວນກາງ ທີ່ນະຄອນວຽງຈັນນັ້ນ ກະວ່າຈະສ້ອມແປງ ແລະດັດແປງເອົາ ຫໍທັມມະສະພາທາດຫລວງ ໃຫ້ເປັນສູນກາງພິພິທພັນແທນຫໍພຣະແກ້ວ ເພາະເຫັນວ່າທາດຫລວງເໝາະ ສົມເປັນສູນກາງວັທນະທັມຂອງຊາດ ສ່ວນຫໍພຣະແກ້ວກໍຈະໄດ້ຕົກແຕ່ງໃຫ້ເປັນທີ່ຂາບໄຫວ້ສັກກາຣະບູຊາ ເປັນອະນຸສອນເຖິງພຣະແກ້ວມໍຣະກົດຕໍ່ໄປ.

ໃນການຂ້າງໜ້າ ກໍຈະໄດ້ຈັດຕັ້ງພິພິທພັນສ່ວນພູມີພາກປະຈຳເຂດແຂວງຕ່າງໆຕາມລຳດັບ ເທົ່າທີ່ມີຄວາມສາມາດ ແລະ ໂອກາດອຳນວຍໃຫ້.

໕/- <u>ໂຄງການພິເສດ</u> - ເພື່ອໃຫ້ແຜນນະໂຍບາຍດັ່ງກ່າວ ໄດ້ຮັບຜົນສຳເຣັດ ແລະກ້າວໜ້າ

ທາງກະຊວງອາດຈະໄດ້ຈັດຕັ້ງກົມໃໝ່ຂຶ້ນອີກກົມໜຶ່ງ ຊຶ່ງອາດຈະເອີ້ນຊື່ວ່າ "ກົມຕຳຣາ" ກົມນີ້ຈະມີໜ້າທີ່ຄົ້ນຄວ້າຮວບຮວມ ແລະຮຽບຮຽງປຶ້ມຫລັກສູດ ຫລືຕຳຫລັບຕຳຣາຕ່າງໆ ແລະອາດຈະແບ່ງອອກເປັນ ໓ ກອງຄື :

໑. <u>ກອງແບບຮຽນ ແລະຫລັກສູດ</u> : – ມີໜ້າທີ່ໃນການແປຮຽບຮຽງຫລັກສູດ ແລະແບບຮຽນຕ່າງໆ ທີ່ຈະໃຊ້ໃນໂຮງຮຽນປຣິຍັດຕິທັມທົ່ວປະເທດ ຕັ້ງແຕ່ຊັ້ນປຖົມຈົນເຖິງມັທຍົມ ແລະອຸດົມ.

໒. <u>ກອງແປ ແລະຊຳຣະພຣະໄຕຣປິດົກ</u> : – ກອງນີ້ມີໜ້າທີ່ຮວບຮວມຄົ້ນຄວ້າ, ແປ ແລະ ຊຳຣະພຣະໄຕຣປິດົກຂອງຊາດ ນອກນີ້ຍັງຈະໄດ້ຊຳຣະ ແລະຮຽບຮຽງໜັງສືວັນນະຄະດີ ທີ່ສຳຄັນໆ ອີກດ້ວຍ.

໓. <u>ກອງຕຳຣາເຜີຍແຜ່</u> : – ກອງນີ້ຈະມີໜ້າທີ່ຄົ້ນຄວ້າວາງໂຄງການ ແລະຈັດພິມໜັງສືກ່ຽວກັບການເຜີຍແຜ່ຕ່າງໆ ໃຫ້ມີແນວນະໂຍບາຍອັນຖືກຕ້ອງເໝາະສົມ ເປັນປະໂຍດແກ່ປະເທດຊາດ ສາສນາຕາມຄວາມມຸ້ງໝາຍ.

ເຫດຜົນທີ່ຈະຕັ້ງກົມນີ້ ປະການສຳຄັນກໍຄື : ໑. ໂຮງຮຽນປຣິຍັດຕິທັມຂອງເຮົາໄດ້ຕັ້ງມາ ໓໐ ກວ່າປີແລ້ວ ແຕ່ຍັງບໍ່ທັນມີປຶ້ມແບບຮຽນເປັນຂອງຕົນເອງ ຕ້ອງໄດ້ໄປຊື້ຈາກຕ່າງປະເທດເປັນເຫດໃຫ້ສິ້ນເປືອງເງິນງົບປະມານຂອງຣັຖ ໂດຍບໍ່ມີຜົນກຳໄຣເຂົ້າຣັຖ.

໒. ເມື່ອເຮົາເອົາໜັງສືເຂົ້າມາໃຊ້ ກໍເປັນເຫດໃຫ້ໜັງສື ແລະພາສາຂອງເຂົາຫລັ່ງໄຫລເຂົ້າມາຖ້ວມທັບວັທນະທັມຂອງເຮົາ ຊຶ່ງຈະເປັນເຫດໃຫ້ເຮົາເສື່ອມເສັຽເອກຣາຊທາງດ້ານວັທນະທັມໄປ.

໓. ຈະເປັນການເປີດໂອກາດໃຫ້ບັນດານັກປຣາດທາງຝ່າຍສາສນາຂອງເຮົາ ໄດ້ສແດງຄວາມສາມາດໃນການແຕ່ງຕຳຫລັບຕຳຣາ ເຜີຍແຜ່ຄວາມຮູ້ ເຮັດໃຫ້ຄົນມີວຽກເຮັດງານທຳ ເປັນປະໂຍດແກ່ປະເທດຊາດສາສນາຫລາຍຂຶ້ນ.

ພາຣະໜ້າທີ່ສະເພາະຂອງກະຊວງເວລານີ້ ກໍຄືຈະຍົກຣະດັບຖານະຫົວໜ້າຫ້ອງການທັມມະການແຂວງຂຶ້ນເປັນຫົວໜ້າທັມມະການປະຈຳແຂວງ ໃນຂັ້ນຕໍ່ໄປ.

ນອກນີ້ ກໍຈະໄດ້ເພີ້ມຈຳນວນຂ້າຣາຊການຂຶ້ນໃນທຸກກົມກອງໃຫ້ພຽງພໍເໝາະສົມກັບວຽກງານ ພ້ອມກັນນັ້ນກໍຈະໄດ້ສົ່ງໄປປະຈຳຢູ່ຕາມແຂວງຕ່າງໆ ໃຫ້ພຽງພໍແກ່ຄວາມຕ້ອງການຂອງວຽກງານ ເຊັ່ນດຽວກັນ.

ແຕ່ນະໂຍບາຍ ແລະໂຄງການທັງໝົດທີ່ກ່າວມານີ້ ຈະບັງເກີດຜົນເປັນຄວາມຈິງຕາມຄວາມ

ມຸ້ງໝາຍອັນມາໄດ້ ກໍຈຳເປັນຕ້ອງໄດ້ອາໄສຄວາມຮ່ວມມືສນັບສນູນຢ່າງຈິງຈັງຈາກພຣະຄຸນເຈົ້າທຸກອາດທຸກອົງ ແລະຕ້ອງໄດ້ຮັບຄວາມເຫັນຊອບຈາກຄນະຣັຖບານເສັຽກ່ອນ.

ເພາະສະນັ້ນ ຂ້າພະພຸທເຈົ້າ ຈຶ່ງຂໍນິມົນອາຣາທນາພຣະຄຸນເຈົ້າທັງຫລາຍ ໄດ້ນຳເອົານະໂຍບາຍ ແລະໂຄງການເຫລົ່ານີ້ ໄປພິຈາຣະນາໄຕ່ຕອງໃຫ້ລຶກແນ່ ຫາກເຫັນວ່າຈະເປັນປະໂຍດແກ່ຊາດແລະສາສນາຂອງເຮົາແລ້ວ ກໍຂໍໄດ້ຖືເປັນພາຣະໜ້າທີ່ ລົງມືດຳເນີນການໃນພາກປະຕິບັດຕົວຈິງໃຫ້ບັງເກີດຜົນຕາມເປົ້າໝາຍທີ່ໄດ້ວາງໄວ້ ທັງໝົດນີ້ ກໍເພື່ອເຊີດຊູຊາດ ແລະສາສນາຂອງເຮົາໃຫ້ຈະເຣີນຮຸ່ງເຮືອງ ຕາມພຣະຣາຊປະສົງຂອງພຣະບາດສົມເດັດພຣະເຈົ້າມະຫາຊີວິດ ຕາມຄວາມມຸ້ງໝາຍຂອງຣັຖບານ ແລະຂອງປະຊາຊົນລາວທົ່ວປະເທດ. ໂຄງການ ແລະໜ້າທີ່ທີ່ກ່າວມາຂ້າງບົນນີ້ ຖ້າຫາກປະຕິບັດໄດ້ດີ ຄືດັ່ງໄດ້ກ່າວມານັ້ນ, ມັນຈະຫັນປ່ຽນສະພາບການເຮັດໃຫ້ປະເທດຊາດບ້ານເມືອງເປັນໄປຕາມພຣະທັມຄຳສັ່ງສອນຂອງພຣະສັມມາສັມພຸທະເຈົ້ານັ້ນແທ້. ແຕ່ວ່າການປະຕິບັດໂຄງການ ແລະໜ້າທີ່ດັ່ງກ່າວຂ້າງບົນນີ້ ກໍຈະພົບຄວາມຫຍຸ້ງຍາກຫລາຍປະການ, ເພາະວ່າການປະຕິບັດພຸທສາສນາຢູ່ໃນບ້ານເມືອງຂອງພວກເຮົາ ຕັ້ງແຕ່ນີ້ຣາຊອານາຈັກລາວ ໄດ້ສູນເສັຽເອກະຣາຊ ແລະຕົກໄປເປັນເມືອງຂຶ້ນຂອງຊາດອື່ນພູ້ນມາ, ການປະຕິບັດພຸທສາສນາຂອງພວກເຮົາໄດ້ມີການຜິດພາດ ແລະເຊື່ອມໂຊມໄປຫລາຍຢ່າງຈົນເຮັດໃຫ້ແນວຄິດຂອງຄົນເຮົາລົງເຄີຍຕໍ່ການຜິດພາດເຊື່ອມໂຊມອັນນັ້ນແລ້ວກໍສືບຕໍ່ເຮັດຕາມຄວາມເຂົ້າໃຈຂອງໃຜລາວເລື້ອຍມາ. ການຈະຊອກຄົ້ນຫາໃຫ້ຮູ້ວ່າອັນໃດຜິດ ແລະອັນໃດຖືກຕາມຄຳສັ່ງສອນຂອງພຣະສັມມາສັມພຸທເຈົ້າ ແລ້ວປ່ຽນແປງອັນທີ່ຜິດກັບມາປະຕິບັດອັນທີ່ຖືກນັ້ນ ເປັນການຍາກບໍ່ນ້ອຍ ເພາະວ່າມັນເປັນການຕໍ່ສູ້ທາງດ້ານແນວຄິດຄວາມຮັບຮູ້ ຫລືເຄີຍຊິນຂອງພວກເຮົາແຕ່ລະຄົນ. ນອກຈາກນັ້ນຍັງມີຫລາຍທ້ອງຖິ່ນ ແລະຫລາຍເຜົ່າຊົນທີ່ພຣະພຸທສາສນາຍັງບໍ່ໄດ້ເຂົ້າໄປເຖິງ ການຈະນຳເອົາພຣະທັມຄຳສັ່ງສອນຂອງພຣະພຸທເຈົ້າໄປໃຫ້ຮອດໃຫ້ເຖິງທົ່ວພຣະຣາຊອານາຈັກລາວເຮົານັ້ນກໍເປັນການຍາກ ເພາະວ່າການຄົມມະນາຄົມບໍ່ສະດວກ, ບາງປີກໍຂາດການຮ່ວມໄມ້ຮ່ວມມືຈາກອຸປະສົກອຸປສິກາທັງຫລາຍ, ບາງທີກໍຕ້ອງໄດ້ລະມັດລະວັງຕໍ່ຄວາມບໍ່ປອດໄພນາໆປະການອີກດ້ວຍ,

ແຕ່ອີກດ້ານໜຶ່ງ ພວກເຮົາຄວນເຫັນວ່າ ພວກເຮົາກໍມີຂໍ້ສະດວກຫລາຍປະການທີ່ຈະອຳນວຍໃຫ້ພວກເຮົາເຜີຍແຜ່ ແລະປະຕິບັດສິລທັມຄຳສັ່ງສອນຂອງພຣະພຸທເຈົ້າໄດ້ງ່າຍຂຶ້ນ. ຂໍ້ສະດວກອັນນັ້ນກ່ອນອື່ນແມ່ນພຸທປະຊະຍາທີ່ພວກເຮົາພວມປະຕິບັດຢູ່ນີ້ ມັນເຂົ້າແທດເຖິງຈິດໃຈຂອງມະຫາຊົນ ເຮັດໃຫ້ທຸກຄົນເຫັນດີເຫັນພ້ອມ ແລະພຍາຍາມປົກປັກຮັກສາມາຈົນຮອດປັດຈຸບັນນີ້ ຊຶ່ງເປັນເວລາເຖິງ ໒.໕໐໐ ກວ່າປີແລ້ວ ກໍຍັງຖືກຕ້ອງປອດໄພຢູ່ຄືເກົ່າ, ບໍ່ມີໃຜຈະມາສາມາດເຮັດໃຫ້ໝົ່ນໝອງ ຫລືປ່ຽນແປງໄປເປັນແນວອື່ນໄດ້, ໜັງສືຕ່າງໆທີ່ບັນທຶກເອົາພຣະທັມຄຳສັ່ງສອນຂອງພຣະພຸທເຈົ້າ ໃນແປດໝື່ນ

ສີ່ພັນພະທັມມະຂັນນັ້ນຍັງຄົງມີຢູ່ຢ່າງຄົບຖ້ວນ ເປັນບ່ອນຊ່ວຍໃຫ້ຜູ້ທີ່ຢາກປະຕິບັດພຣະພຸທສາສນາໃຫ້ຖືກຕ້ອງ ໄປຄົ້ນຄວ້າຮ່ຳຮຽນ ເພື່ອດັດແປງແນວຄິດ ແລະການກະທຳຂອງຕົນເອງໄດ້. ນອກຈາກນັ້ນ ພຣະສົງສາມະເນນເປັນຈຳນວນຫລວງຫລາຍຍັງພະຍາຍາມປະພຶດປະຕິບັດພຣະທັມມະວິນັຍ ແລະກິຈະວັດຂອງຕົນເປັນຢ່າງດີສືບຕໍ່ມາຢ່າງເປັນຣະບຽບຮຽບຮ້ອຍ ແລະບັນດາຄະລືຫັດຜູ້ທີ່ເຄີຍໄດ້ບວດຮຽນຂຽນເ່ານກໍຍັງຕັ້ງໜ້າຊ່ວຍເຫລືອພຣະສົງສາມະເນນໃນການເຜີຍແຜ່ພຸທສາສນາໃຫ້ຖືກຕ້ອງ ອັນທີ່ສຳຄັນກວ່າໝູ່ໝົດແມ່ນພວກເຮົາຍັງມີສົມເດັດພຣະສັງຄະຣາຊ ແລະມະຫາເຖຣະວົງສູງສົກ ຍັງຄົງສຖິດເປັນມິ່ງຂວັນຂອງພຣະພຸທສາສນາ ແລະມີພຣະບາດສົມເດັດພຣະເຈົ້າມະຫາຊີວິດ ອົງຊົງເປັນພຣະຣາຊປະຖຸມໃຫ້ເປັນສາສນາປະຈຳຊາດສືບຕໍ່ມາຈົນຮອດປະຈຸບັນນີ້.

ເພື່ອຂຍາຍຂໍ້ສະດວກສຳລັບລຶດຜ່ອນຄວາມຫຍຸ້ງຍາກດັ່ງກ່າວມາຂ້າງບົນນີ້ ຂ້າພຣະພຸທເຈົ້າເຫັນວ່າ ພຣະເຖຣານຸເຖຣະ ພ້ອມທັງກະຊວງທັມມະການ ແລະ ອຸປະສົກ ອຸປະສິກາທັງຫລາຍທີ່ເຂົ້າເຖິງພຸທສາສນາແລ້ວນັ້ນ ຈະຕ້ອງພ້ອມກັນຄົ້ນຄວ້າໃຫ້ເຫັນແຈ້ງວ່າແນວຄິດ ແລະການກະທຳອັນໃດທີ່ຖືກຕ້ອງຕາມຄຳສັ່ງສອນຂອງພຣະສັມມາສັມພຸທເຈົ້າ ເພື່ອນຳເອົາໄປຊີ້ແຈງເຜີຍແຜ່ໃຫ້ພີ່ນ້ອງຮ່ວມຊາດພວກເຮົາເຂົ້າໃຈ ແລະປະຕິບັດຢ່າງຖືກຕ້ອງແທ້. ການຄົ້ນຄວ້າປະຕິບັດດັ່ງກ່າວນີ້ ກໍເປັນການຍາກເຊັ່ນດຽວກັນ ເພາະມັນເປັນການຕໍ່ສູ້ຣະຫວ່າງທັມມະ ກັບ ແນວຄິດທີ່ຝືນທັມມະ ທີ່ອາດຈະເກີດຂຶ້ນຢູ່ໃນຕົວຂອງພວກເຮົາເອງ ແລະ ຢູ່ໃນພີ່ນ້ອງຮ່ວມຊາດຂອງພວກເຮົາແຕ່ລະຄົນດ້ວຍ. ຄວາມຍາກອັນນີ້ຈະເຮັດໃຫ້ໜ້າທີ່ຂອງພວກເຮົາເປັນອັນໜັກໜາ ແລະຍາວນານອີກດ້ວຍ. ແຕ່ຖ້າວ່າພວກເຮົາໝົດທຸກຄົນຫາກບາກບັ່ນພະຍາຍາມ ແລະສາມັກຄີເປັນຈິດໜຶ່ງໃຈດຽວກັນປະຕິບັດໃຫ້ຖືກຕາມຄຳສັ່ງສອນຂອງພຣະສັມມາສັມພຸທເຈົ້າແລ້ວ ແນວໃດພວກເຮົາກໍຈະບັນລຸຜົນສຳເຣັດໄດ້ ເພາະວ່າທັມມະຍ່ອມຊະນະອະທັມໃນທີ່ສຸດ.

ຂໍຖວາຍຄວາມເຄົາຣົບ.

ພຣະໂອວາດ ອັດກອງປະຊຸມສົງສ໌ປະຈຳປີພຸທສັກຣາຊ ໒໕໑໗

- ຂ ອ ງ -

ອົງສົມເດັດພຣະພຸທະຊິໂນຣົດ ສົກົລມະຫາສັງຄະປາໂມກຂະ

ສົມເດັດພຣະສັງຄະຣາຊ ທັມມະຍານະມະຫາເຖຣະ

ທີ່ຫ້ອງປະຊຸມ ມະຫາກຸຕິ ວັດພຣະທາດຫລວງ ພຣະນະຄອນວຽງຈັນທ໌

ວັນທີ່ ໔ ພິສຈິກາ ພ.ສ. ໒໕໑໗ - ໑໙໗໔

-:-:-:-:-:-:-:-:-:-:-

ຂ້າແດ່ ພຣະເຖຣານຸເຖຣະ ທີ່ຮັກແພງທັງຫລາຍ.

ຈະເຣີນພອນ ພນະທ່ານ ແລະ ທ່ານຜູ້ມີກຽດທັງຫລາຍ.

ນັບແຕ່ຂ້າພະເຈົ້າໄດ້ມາກ່າວໃຂກອງປະຊຸມຫລວງພຣະອາດຍາສິດສົງ ທັມມະການທົ່ວພຣະຣາຊອານາຈັກປະຈຳປີ ໑໙໗໔, ເມື່ອວັນທີ່ ໑ ເດືອນນີ້ເປັນຕົ້ນມາ ຂ້າພະເຈົ້າໄດ້ຕິດຕາມຮັບຊາບຜົນການປະຊຸມຕລອດວາຣະ ຈາກເລຂາຂອງຂ້າພະເຈົ້າ ໄດ້ຣາຍງານຜົນການປະຊຸມໃຫ້ຊາບ ກ່ອນອື່ນ ຂ້າພະເຈົ້າມີຄວາມໂສມະນັດເປັນຢ່າງຍິ່ງ ແລະອໍອະນຸໂມທະນາສາທຸການ ຕໍ່ມະຫາກຸສົນເຈຕນາອັນປະເສີດສູງສຸດ ຂອງພຣະອາດຍາສິດສົງ ແລະທັມມະການໄດ້ສາມັກຄີ ແລະໃຊ້ຂັນຕິ ວິຣິຍະພາບອັນແຮງກ້າປະຊຸມປຶກສາຫາລືຄົ້ນຄວ້າຫາແນວທາງປັບປຸງສົ່ງເສີມຊາດ ແລະພຣະພຸທສາສນາໃຫ້ຈເຣີນຮຸ່ງເຣືອງຍິ່ງ ໆ ຂຶ້ນໄປ.

ຂ້າພະເຈົ້າ ໄດ້ກ່າວແລ້ວວ່າ ກອງປະຊຸມຫລວງຄັ້ງນີ້ ມີຄວາມສຳຄັນຍິ່ງໃຫຍ່ຂອງຄນະສົງລາວເຮົາ ຍ້ອນວ່າໄດ້ຈັດຂຶ້ນເທິງພື້ນຖານຄວາມສາມະຄີຖືກຕ້ອງປອງດອງຊາດ ໃນວາຣະທີ່ພີ່ນ້ອງລາວທຸກຝ່າຍສາມາດກຳຈັດ ປັດເປົ່າອະກຸສົນອັນແສນມືດມົນ ຄືຄວາມເຂົ້າໃຈຫລົງຜິດຊຶ່ງກັນ ແລະກັນນັ້ນໄດ້ ແລ້ວຫັນໜ້າເຂົ້າມາຮ່ວມກັນສ້າງຄວາມວຸດທິຈຳເຣີນໃຫ້ແກ່ຊາດ ແລະພຣະສາສນາອັນເປັນທີ່ຮັກ ໂຄຣົບຂອງພວກເຮົາໃຫ້ໝັ້ນຄົງຖາວອນສືບໄປຕລອດກັລະປະວະສານໄດ້ນັ້ນ ກໍຕ້ອງອາໄສບໍຣິສັດສີ່ຈຳພວກຊ່ອຍກັນຊຸກຍູ້ສົ່ງເສີມ ແລະປະຕິບັດດຳເນີນຕາມພຸທໂອວາດສອງປະການ ຄື : ໑- ສັນຕິເນວະ ນຸພະຣະຫູຍະ ແປວ່າ ທ່ານຈົ່ງພະຍາຍາມຂົນຂວາຍສ້າງແຕ່ສັນຕິພາບແກ່ຕົນແລະຄົນອື່ນໃຫ້ຫລາຍທີ່ສຸດ. ໒. ວາຍະເມເຖວະປຸຣິໂສ ຍາວະອັທັສສະ ນິບປະທາ ບຸກຄົນເຮົາຄວນພຽນພະຍາຍາມຈົນກວ່າຈະເປັນຜົນສຳເຣັດ ຜົນສຳເຣັດນັ້ນຈະກາຍເປັນປະໂຍດ ແກ່ຕົນ ແລະສົງຄົມດ້ວຍດັ່ງນີ້.

ເມື່ອພຸທບໍຣິສັດ ໄດ້ປະຕິບັດຕາມຫລັກທັມມະທັງສອງປະການດັ່ງກ່າວນີ້ ແນ່ນອນຊາດ ແລະ ພຣະພຸທສາສນາຈະມີແຕ່ຄວາມຣົ່ມເຢັນເປັນສຸກຢ່າງແນ່ແທ້.

ທ່ານ ພຣະເຖຣານຸເຖຣະ ພນະທ່ານ ແລະທ່ານຜູ້ມີກຽດທັງຫລາຍ.

ຂ້າພະເຈົ້າ ແກ່ເຖົ້າຊະຣາອາຍຸ ໘໓ ປີແລ້ວ ຈຶ່ງຂໍຮ້ອງຕໍ່ບຸຄຄົລທຸກທ່ານໄດ້ຫລຽວຄືນຫລັງທວນຣະລຶກເຖິງອະດີດຕະການປະວັດສາດ ຂອງລາວເຮົາທີ່ສູນເສັຽຄວາມເປັນເອກຣາຊແກ່ຊາດອື່ນ ສູນເສັຽອະທິປະໄຕຂອງຊາດ ແລະພຣະພຸທສາສນາຖືກທຳຣາຍເສັຽຫາຍຢ່າງນີ້ບໍ່ອື່ນບໍ່ທ້ອນນັ້ນກໍຍ້ອນຄົນໃນຊາດຂາດຫລັກທັມໃນທາງພຣະພຸທສາສນາເປັນເຄື່ອງຊ່ອຍປຸກເຕືອນສະຕິນັ້ນເອງ.

ມາບັດນີ້ ເຖິງໂອກາດ ແລະສົມຄວນແລ້ວຢ່າງຍິ່ງ ພຣະສົງເຮົາຜູ້ເປັນມະຖະ ແລະເນື້ອນາບຸນຂອງໂລກທີ່ຈະໄດ້ເສັຽສະລະພຳເພັງຕົນໃຫ້ເກີດປະໂຍດແກ່ປະເທດຊາດ ແລະພຣະພຸທສາສນາຕາມຮອຍບາດພຣະບໍຣົມມະຄຣູສັມມາສັມພຸທເຈົ້າຂອງເຮົາທັງຫລາຍ ແລະດຳເນີນຕາມປະຕິປະທາຈະຣິຍາວັດຂອງຄຣູບາອາຈານ ຝ່າຍຄນະສົງ ແຕ່ປາງບູຣານການກໍໄດ້ນຳພາ ປະຕິບັດເປັນແບບຢ່າງໃຫ້ເຫັນມາແລ້ວ ດັ່ງຕົວຢ່າງ ພຣະຄຣູໂພນສະເມັກ ຫລື ຍາຄຣູຂີ້ຫອມເປັນຕົ້ນ ແລະອົງອື່ນໆອີກ ເເປັນຈຳນວນຫລາຍ ຊຶ່ງແມ່ນວ່າປະເທດອື່ນໆ ທີ່ມີຊາດ ແລະພຣະພຸທສາສນາສະຖິດສະຖາພອນດ້ວຍດີຕລອດມານັ້ນ ປະວັດສາດບອກໃຫ້ຮູ້ວ່າ ພຣະສົງໃນປະເທດນັ້ນ ໄດ້ມີບົດບາດ ອັນສຳຄັນຊ່ອຍສັງຄົມຢ່າງກວ້າງຂວາງເໜືອຊີວິດຈິດໃຈຂອງຄນະຊຸປາສິກາສເນີມາ.

ສັ້ນນ ຂ້າພະເຈົ້າຂໍພຣະອາດຍາສິດສົງ ແລະທັມມະການ ໄດ້ຊ່ອຍກັນອູ້ມຊູຫນາກຜົນແລະຂໍຜົນຂອງການປະຊຸມສົງຄັ້ງສຳຄັນນີ້ ໃຫ້ມີປະສິດທິພາບ ແລະບັງເກີດຫມາກຜົນ ແກ່ປະເທດຊາດ ແລະພຣະພຸທສາສນາໃຫ້ເປັນ ຫິຕານູທິຕະສຸຂ ແກ່ຊາດບ້ານເມືອງ ທັງໃນພົບນີ້ ແລະປະຣະໂລກເບື້ອງຫນ້າດ້ວຍ.

ໃນທ້າຍສຸດນີ້ ຂ້າພະເຈົ້າຂໍປະກາດ ອັດກອງປະຊຸມສົງຄັ້ງສຳຄັນນີ້ໄວ້ແຕ່ພຽງເທົ່ານີ້ ຂໍອໍານາດເດຊະພຣະປາຣະມີ ແລະຄູນແຫ່ງພຣະສີຣັຕນະໄຕຣ ພ້ອມທັງຕະປະກັນ ທີ່ທ່ານທັງຫລາຍໄດ້ຍົນຂວາຍພຳເພັງມາແລ້ວນັ້ນ ຈົ່ງມາຄູ້ມ ຄອງອຳນວຍສັນຕິສຸກແດ່ທຸກໆທ່ານເທີນ.